ວາລະສານວິທະຍາສາດສັງຄົມ (ວວສ) ສະບັບ 23, ຊຸດທີ 1 (2024) 382-392

ວາລະສານວິທະຍາສາດສັງຄົມ ມະຫາວິທະຍາໄລແຫ່ງຊາດ
ISSN: 2664-6331 Homepage: https://ssj.sjnl.la/
https://doi.org/10.71026/ss.2024.01038



# ຜົນສຳເລັດການກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກ ພັກໜຸ່ມຂອງພັກປະຊາຊົນປະຕິວັດລາວ

ກູຢ່າງ ສີສົມບຼົງ, ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ
E mail: kyeejyaj@gmail.com

**ຂໍ້ມູນບົດຄວາມ** ວັນທີສົ່ງ 15/10/2023 ວັນທີປັບປຸງຄັ້ງທີ 20/3/2024 ວັນທີຕອບຮັບ 30/6/2024

## ບົດຄັດຫຍໍ້

ການສຶກສາມີຈຸດປະສົງສຶກສາ ຜົນສຳເລັດການກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກພັກໜຸ່ມຂອງພັກປະຊາຊົນປະຕິວັດລາວ, ບັນຫາ ແລະ ແນວທາງໃນຕໍ່ໜ້າ, ຜູ້ສຶກສາໄດ້ນຳໃຊ້ວິທີການສຶກສາແບບຄຸນນະພາບ ໂດຍນຳໃຊ້ວິທີການສຶກສາເອກະສານຕ່າງໆທີ່ກ່ຽວຂ້ອງກັບການກໍ່ສ້າງ ແລະ ບຳລຸງພະນັກງານໜຸ່ມຂອງພັກປະຊາຊົນປະຕິວັດລາວ ແລະ ດຳເນີນການວິ ເຄາະເອກະສານດັ່ງກ່າວ. ຜົນການສຶກສາພົບວ່າ: ຜົນສຳເລັດໃນການກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກພັກໜຸ່ມຂອງພັກປະຊາຊົນປະຕິວັດລາວ: ພັກປະຊາຊົນປະຕິວັດລາວໄດ້ເອົາໃຈໃສ່ກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກພັກໜຸ່ມໃຫ້ມີຄວາມເຊື່ອໝັ້ນຢ່າງຕາຍໃຈຕໍ່ອຸດົມການສັງຄົມນິຍົມ, ມີຫຼັກໝັ້ນມິດ-ສັດຕູຢ່າງຈະແຈ້ງ, ມີຄວາມຮູ້ເຂົ້າໃຈກ່ຽວກັບລັດທິມາກ-ເລນິນ, ແນວທາງ, ແຜນນະໂຍບາຍຂອງພັກ ແລະ ກົດໝາຍຂອງລັດ ຢ່າງເລິກເຊິ່ງ ໂດຍຜົນສຳເລັດການກໍ່ສ້າງ, ບຳລຸງດ້ານວິຊາສະເພາະ: ການກໍ່ສ້າງ , ບຳລຸງພະນັກງານ-ສະມາຊິກພັກໜຸ່ມດ້ານວິຊາສະເພາະ ໄດ້ເລີ່ມຈາກຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ການເມືອງ, ເລີ່ມຈາກໜ້າທີ່ການເມືອງ ຂອງພັກ-ລັດ, ຮັບປະກັນລັກສະນະສືບທອດປ່ຽນແທນ ບົນພື້ນຖານຕົວເລກການສຶກສາ ຂອງກະຊວງສຶກສາທິການ ແລະ ກິລາ ຄື: ປີ 2018 ໄດ້ສົ່ງພະນັກງານໄປບຳລຸງ-ກໍ່ສ້າງທັງໝົດ 506 ຄົນ, ຍິງ 138 ຄົນ; ໃນປີ 2019 ໄດ້ສົ່ງພະນັກງານໄປບຳລຸງ-ກໍ່ສ້າງທັງໝົດ 514 ຄົນ, ຍິງ 125 ຄົນ; ໃນປີ 2020 ໄດ້ສົ່ງພະນັກງານໄປບຳລຸງ-ກໍ່ສ້າງທັງໝົດ 429 ຄົນ, ຍິງ 115 ຄົນ; ໃນປີ 2021 ໄດ້ສົ່ງພະນັກງານໄປບຳລຸງ-ກໍ່ສ້າງທັງໝົດ 625 ຄົນ, ຍິງ 298 ຄົນ ແລະ ປີ 2022 ໄດ້ສົ່ງພະນັກງານ-ສະມາຊິກພັກໄປກໍ່ສ້າງ, ບຳລຸງດ້ານວິຊາສະເພາະ ຈຳນວນ 996 ຄົນ, ຍິງ 302 ຄົນ. ບັນຫາຕັ້ງຂຶ້ນ ໃນການກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກພັກໜຸ່ມ ຂອງພັກປະຊາຊົນປະຕິວັດລາວໃນໄລຍະຜ່ານມ: ບາງຄັ້ງບໍ່ທັນເລີ່ມຈາກໜ້າທີການເມືອງ ແລະ ບໍ່ທັນຮັບປະກັນລັກສະນະເປັນລະບົບຄົບຊຸດ: ການກໍ່ສ້າງ-ບຳລຸງພະນັກງານ-ສະມາຊິກພັກໜຸ່ມຜ່ານມາ ບາງຄັ້ງຍັງເຮັດບໍ່ທັນເຮັດໄດ້ດີ, ບໍ່ທັນຄົບຊຸດ, ບໍ່ທັນເລີ່ມຈາກໜ້າທີ່ການເມືອງ, ບໍ່ແທດເໝາະກັບສະພາບຄວາມເປັນຈິງຂອງອົງການ ແລະ ວຽກງານຕົວຈິງຂອງແຕ່ລະຂົງເຂດວຽກງານ.ແລະ ທິດທາງໃນຕໍ່ໜ້າຄວນລົງທຶນຢ່າງເໝາະສົມເຂົ້າໃນການກໍ່ສ້າງ, ບຳລຸງພະນັກງານ, ສະມາຊິກພັກໜຸ່ມ: ພັກ-ລັດ ຄວນສະໜອງງົບ ປະມານເຂົ້າໃນການກໍ່ສ້າງ, ປັບປຸງພື້ນຖານໂຄງລ່າງໃຫ້ທັນສະໄໝ ເປັນຕົ້ນຫ້ອງການ, ຫ້ອງຮຽນ, ຫ້ອງອ່ານ, ຫໍສະໝຸດ, ຫ້ອງອາຫານ, ຫໍພັກ, ສະໜາມກິລາ ແລະ ສ້າງສະພາບແວດລ້ອມທີ່ດີ ໃຫ້ແກ່ການຮຽນ-ການສອນ. ພ້ອມນັ້ນ, ຄວນປະກອບອຸປະກອນ, ວັດຖຸເຕັກນິກທີ່ທັນສະໄໝ ເພື່ອສ້າງຄວາມສະດວກໃຫ້ແກ່ການເຄື່ອນໄຫວປະຕິບັດໜ້າທີ່ຄົ້ນຄວ້າສິດສອນ ຂອງຄູ-ອາຈານໃນແຕ່ລະສາຂາວິຊາອາຊີບທີ່ແຕກຕ່ງກັນ.

**ຄຳສັບສຳຄັນ:** ຜົນສຳເລັດ, ການກໍ່ສ້າງ ແລະ ບຳລຸງພະນັກງານໜຸ່ມ, ພັກປະຊາຊົນປະຕິວັດລາວ

# The achievements, challenges, and future directions in building and nurturing young party members and cadres of the Lao People's Revolutionary Party

Kouyang SISOMBLONG
National Academy of Politics and Public Administration
E mail: kyeejyaj@gmail.com

## Abstract

This study examines the achievements, challenges, and future directions in building and nurturing young party members and cadres of the Lao People's Revolutionary Party (LPRP). A qualitative research method was employed, analyzing various documents related to the

development of these young members.

The findings indicate significant achievements in instilling a strong belief in socialist ideology among young party members, fostering a clear understanding of friend-enemy distinctions, and promoting a deep comprehension of Marxism-Leninism, as well as the Party's guidelines, policies, and state laws. Additionally, professional skill development for these members has been aligned with the political responsibilities of the Party and State, ensuring a succession of qualified personnel. According to the Ministry of Education and Sports, training statistics show a progressive increase in personnel sent for training: 506 in 2018 (138 women), 514 in 2019 (125 women), 429 in 2020 (115 women), 625 in 2021 (298 women), and 996 in 2022 (302 women).

However, challenges persist, including inadequate alignment with political functions and a lack of a comprehensive training system, which have hindered effective development tailored to organizational needs. To enhance the construction and training processes, it is essential for the Party and State to allocate appropriate budgets for infrastructure modernization—such as offices, classrooms, libraries, and sports facilities—and to provide modern equipment and materials to support educators across various professional fields.

**Keywords:** Achievements, Construction and Training of Young Party Members, Lao People's Revolutionary Party.

## ເຫດຜົນ ແລະ ຄວາມສຳຄັນ

ໃນຍຸກປັດຈຸບັນພັກ ແລະ ລັດຖະບານ ສປປ ລາວໄດ້ຖືວ່າ ບຸກຄະລາກອນແມ່ນເປັນຊັບ ພະຍາກອນມະນຸດທີ່ສຳຄັນທີ່ສຸດຂອງຊາດ ແລະ ໃນການບໍລິຫານວຽກງານ. ຢູ່ໃນອົງການ ຫຼື ໜ່ວຍງານໃດໜຶ່ງ ເພື່ອຈະສາມາດປະຕິບັດວຽກງານໃຫ້ບັນລຸເປົ້າໝາຍຢ່າງມີປະສິດທິຜົນໄດ້ນັ້ນແມ່ນຕ້ອງຂຶ້ນຢູ່ກັບຄຸນນະພາບ ແລະ ຄວາມອາດສາມາດຂອງຊັບພະຍາກອນມະນຸດໃນອົງກອນຂອງຕົນ, ເຊິ່ງ ໝາຍຄວາມວ່າ ບຸກຄະລາກອນ ຫຼື ຊັບພະຍາກອນມະນຸດນັ້ນຕ້ອງເປັນຄົນທີ່ມີຄວາມຮູ້, ມີຄວາມສາມາດ, ຊຳນິຊຳນານ ແລະ ມີທັດສະນະຄະຕິທີ່ດີ ເໝາະສົມກັບການປະຕິບັດໜ້າທີ່ແຕ່ລະຢ່າງ. ການຄັດເລືອກບຸກຄະລາກອນເຂົ້າເຮັດວຽກນັ້ນມີຈຸດມຸ່ງໝາຍທີ່ຈະໃຫ້ໄດ້ຄົນດີ,

ມີຄວາມຮູ້, ຄວາມສາມາດ ເໝາະສົມກັບການເຮັດວຽກ. ແຕ່ເນື່ອງຈາກສະພາບແວດລ້ອມທັງພາຍໃນ ແລະ ພາຍນອກອົງການມີການປ່ຽນແປງຢູ່ສະ ເໝີ ຕະຫຼອດເຖິງມີການຄົ້ນພົບວິທະຍາການ, ເຕັກໂນໂລຊີໃໝ່ໆ. ສະນັ້ນ, ຈຶ່ງເຮັດໃຫ້ບຸກຄະລາກອນຈຳນວນໜຶ່ງບໍ່ສາມາດປັບຕົວໄດ້ ແລະ ໄປບໍ່ທັນກັບສະພາບການປ່ຽນແປງໃໝ່, ເນື່ອງຈາກຂາດຄວາມຮູ້ຄວາມສາມາດໃນການບໍລິຫານວຽກງານດ້ານອື່ນໆ ໃນເບື້ອງຕົ້ນ ການຄັດເລືອກບຸກຄະລາກອນເຂົ້າມາໃນອົງການຫຼືໜ່ວຍງານຖືວ່າມີຄວາມ ເໝາະສົມໃນການເຮັດວຽກງານພຽງແຕ່ໃນດ້ານໃດໜຶ່ງເທົ່ານັ້ນ. ອີກຈຳນວນໜຶ່ງທີ່ບໍ່ສາມາດປັບຕົວໄດ້ກໍຈະກາຍເປັນຜູ້ທີ່ບໍ່ມີຄວາມສາມາດປະຕິບັດໜ້າທີ່ໄດ້ຢ່າງມີປະສິດທິພາບຫຼືບໍ່ສາມາດປະຕິບັດໜ້າທີ່ໄດ້ດີ. ສະນັ້ນ, ຈຶ່ງເປັນໜ້າທີ່ຂອງອົງການຫຼືໜ່ວຍງານທີ່ຈະຕ້ອງພັດທະນາບຸກຄະລາກອນນັ້ນໃຫ້ມີຄຸນນະພາບແລະສັກກະຍະພາບເພີ່ມຂຶ້ນໃຫ້ທັນກັບການປ່ຽນແປງໃໝ່ຂອງສະພາບແວດລ້ອມຕ່າງໆເພື່ອໃຫ້ອົງການ ຫຼື ໜ່ວຍງານສາມາດດຳເນີນງານໄດ້ຢ່າງມີປະສິດທິພາບແລະເກີດປະສິດທິຜົນສູງສຸດ. ອີກປະການໜຶ່ງ, ການພັດທະນາບຸກຄະລາກອນມີຈຸດປະສົງ ເພື່ອຈັດປະສົບປະການຂອງການຮຽນຮູ້ໃຫ້ເປັນລະບົບໃຫ້ບຸກຄະລາກອນ, ເພື່ອສາມາດປະຕິບັດວຽກງານຂອງອົງການໄດ້ຢ່າງມີປະສິດທິຜົນລວມທັງເປັນການຊ່ວຍໃຫ້ບຸກຄະລາກອນເກີດການຮຽນຮູ້ ແລະ ປັບປ່ຽນພຶດຕິກຳການເຮັດວຽກຄຽງຄູ່ກັບວິທີການຮຽນຮູ້, ເສີມສ້າງຄວາມຮູ້, ຄວາມເຂົ້າໃຈ, ທັກສະ ແລະ ທັດສະນະຄະຕິ, ສ້າງແຮງຈູງໃຈແລະເປີດໂອກາດໃຫ້ບຸກຄະລາກອນໄດ້ນຳຄວາມຮູ້, ຄວາມເຂົ້າໃຈ, ທັກສະ ແລະ ທັດສະນະຄະຕິອອກມາໃຊ້ໃຫ້ເກີດຜົນເພື່ອໃຫ້ບຸກຄະລາກອນມີຂີດຄວາມສາມາດໃນການປະຕິບັດວຽກງານສູງຂຶ້ນ (ຄະນະໂຄສະນາອົບຮົມສູນກາງພັກ, 2011).

ໃນສະພາບ ແລະ ເງື່ອນໄຂທີ່ປະເທດເຮົາໄດ້ຮັບການພັດທະນາຢ່າງຕໍ່ເນື່ອງທີ່ມີການເຊື່ອມໂຍງກັບພາກພື້ນ ແລະ ສາກົນ. ພະນັກງານໜຸ່ມກໍ່ແມ່ນປັດໄຈໜຶ່ງທີ່ເປັນກຳລັງແຮງສຳຄັນໃນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກເພື່ອສູ່ຮາກຖານໂດຍອີງໃສ່ມະຕິ 3 ສ້າງຂອງພັກໃນໄລຍະຜ່ານມາ ເປັນບ່ອນອີງໃຫ້ແກ່ຂະບວນກໍ່ສ້າງ ແລະ ບຳ

ລຸງພະນັກງານໜຸ່ມໄດ້ສອດທ້ອຍເນື້ອໃນເຂົ້າໃນວຽກງານດັ່ງກ່າວ ເພື່ອຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ແຫ່ງລັດ ແຕ່ລະໄລຍະເວົ້າລວມ, ເວົ້າສະເພາະກໍແມ່ນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມທົ່ວປະເທດແຕ່ລະໄລຍະເພື່ອຮັບປະກັນໃຫ້ແກ່ເປົ້າໝາຍລວມຂອງພັກທີ່ໄດ້ກໍານົດໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີຄັ້ງທີ IX ແລະໃນມະຕິ XI ຂອງພັກປະຊາຊົນປະຕິວັດລາວ ເຫັນວ່າພະນັກງານ, ສະມາຊິກພັກໜຸ່ມ ເປັນທຶນຮອນອັນປະເສີດຂອງພັກ, ຂອງຊາດ, ເປັນປັດໄຈຕັດສິນຜົນໄດ້ຜົນເສຍຂອງການຈັດຕັ້ງປະຕິບັດແນວທາງຂອງພັກ, ນະໂຍບາຍຂອງລັດ. ດັ່ງປະທານ ໄກສອນ ພົມວິຫານ ໄດ້ເວົ້າວ່າ: ພະນັກງານແມ່ນທຶນຮອນອັນປະເສີດທີ່ສຸດຂອງພັກ, ເປັນຜູ້ນໍາພາປະຊາຊົນ, ເປັນຜູ້ຮັບໃຊ້ປະຊາຊົນ, ເປັນຂົວຕໍ່ລະຫວ່າງພັກກັບມະຫາຊົນ, ທຸກໆວຽກງານການປະຕິວັດຂອງພັກ ຈະດີ ຫຼື ຮ້າຍ, ຈະມີໄຊ ຫຼື ປະລາໄຊ ກໍລ້ວນແຕ່ພະນັກງານຂອງພັກ ເປັນຜູ້ຕັດສິນ. ສະນັ້ນ, ພັກ-ລັດຖະບານ ເວົ້າລວມ, ຄະນະພັກ, ອົງການປົກຄອງແຕ່ລະຂັ້ນ ຕ້ອງເອົາໃຈໃສ່ວຽກງານກໍ່ສ້າງ, ບໍາລຸງພະນັກງານ-ສະມາຊິກພັກໜຸ່ມ ໃຫ້ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທໍາປະຕິວັດດີ, ມີຄວາມຮູ້-ຄວາມສາມາດ, ມີແບບແຜນວິທີເຮັດວຽກວິທະຍາສາດ, ມີສຸຂະພາບແຂງແຮງ ແລະ ພັດທະນາສະພາວະຄວາມເປັນຜູ້ນໍາ ຢ່າງເປັນປະຈໍາ ຈຶ່ງສາມາດຮອງຮັບໜ້າທີ່ການເມືອງ ຂອງພັກ-ລັດ ໃນໄລຍະໃໝ່ (ກົມການເມືອງສູນກາງພັກ, 2021).

ການບໍາລຸງ ແລະ ກໍ່ສ້າງພະນັກງານໜຸ່ມແມ່ນຄວາມຈໍາເປັນອັນຮີບດ່ວນ ທີ່ພັກ ແລະ ລັດຖະບານໃຫ້ຄວາມສໍາຄັນຂອງການຄຸ້ມຄອງພະນັກງານໃນປັດຈຸບັນແມ່ນການກໍ່ສ້າງ ແລະ ບໍາລຸງພະນັກງານ ຍ້ອນເປັນປັດໄຈຕັດສິນໄຊຊະນະໃນການປະຕິບັດຕາມແນວທາງນະໂຍບາຍຂອງພັກປະຊາຊົນປະຕິວັດລາວ. ນອກຈາກນີ້, ວຽກງານກ່ຽວກັບພະນັກງານຍັງເປັນວຽກງານທີ່ສັບສົນຫຍຸ້ງຍາກ ຍ້ອນມັນແມ່ນວິທະຍາສາດກ່ຽວກັບຄົນ. ດັ່ງນັ້ນ, ປະທານ ໄກສອນ ພົມວິຫານ ວິລະບູລຸດຂອງຊາດລາວ ເຄີຍໄດ້ສັ່ງສອນເອົາໄວ້ວ່າ: "ຕ້ອງຮູ້ພະນັກງານ, ເຂົ້າໃຈພະນັກງານ, ຮັກພະນັກງານ ແລະ ຮູ້ນໍາໃຊ້ພະນັກງານ" ຈຶ່ງຈະເກີດການພັດທະນາທີ່ແທ້ຈິງ. ພ້ອມດຽວກັນນັ້ນ, ທ່ານ ຍັງໄດ້ຄົ້ນຄວ້າ ແລະ ພົບເຫັນສະພາບຂອງຖັນແຖວພະນັກງານວ່າ ຍັງມີພະນັກງານຈໍານວນຫຼາຍທີ່ຕິດພະຍາດຮ້າຍແຮງຫຼາຍຊະນິດເຊັ່ນ "ພະນັກງານສ່ວນໜຶ່ງຍັງມີພະຍາດຂີ້ຄ້ານອ່ານ, ຂີ້ຄ້ານຄົ້ນຄວ້າຮໍ່າຮຽນ, ຂີ້ຄ້ານຄິດຫງໍາ ບໍ່ສະແຫວງຫາຄວາມຮູ້ ແລະ ບົດຮຽນໃໝ່, ມັກຢູ່ຊື່ໆຕາມຄວາມຊິນເຄີຍເກົ່າ ແບບຊາວນາຜູ້ຜະລິດນ້ອຍ". ສ່ອງແສງໃຫ້ເຫັນວ່າ ວຽກງານພະນັກງານແມ່ນວຽກງານທີ່ລະອຽດອ່ອນ ພັກຈຶ່ງຖືວ່າເປັນວຽກທີ່ຕ້ອງໄດ້ເຮັດຢ່າງເນື່ອງນິດລຽນຕິດ, ເຮັດຢ່າງມີແຜນການ, ເຮັດມີຈຸດສຸມ, ຈຸດເລັງຢ່າງຈະແຈ້ງ ພ້ອມທັງເຮັດຢ່າງຄົບຊຸດເລີ່ມແຕ່ການເລືອກເຟັ້ນບໍາລຸງ-ກໍ່ສ້າງ, ການບັນຈຸ, ຊັບຊ້ອນຈັດວາງ, ການຄຸ້ມຄອງ-ປ້ອງກັນ, ການຕີລາຄາ ແລະ ການປະຕິບັດນະໂຍບາຍດ້ານຕ່າງໆຕໍ່ພະນັກງານ ມັນເປັນສາຍກ່ຽວພັນແບບກາຍະອິນຊີ, ມີການຂຶ້ນແຜນບໍາລຸງ-ກໍ່ສ້າງພະນັກງານຢ່າງຈະແຈ້ງ ຮັບປະກັນການດັດສົມຖັນແຖວພະນັກງານແຕ່ລະພາກສ່ວນ, ແຕ່ລະຂົງເຂດ ແລະ ແຕ່ລະຮຸ່ນສືບທອດໂດຍຕິດພັນສອດຄ່ອງ ແລະ ຕອບສະໜອງກັບໜ້າທີ່ການເມືອງຂອງແຕ່ລະໄລຍະ, ບໍ່ຄວນບໍາລຸງ-ກໍ່ສ້າງພະນັກງານຕາມມີຕາມເກີດໂດຍບໍ່ມີແຜນກໍ່ສ້າງ ເຊິ່ງຈະຕົກເຂົ້າໃນສະພາບພະນັກງານເຫຼືອບໍ່ພໍຄືດັ່ງປັດຈຸບັນນີ້ (ຄະນະໂຄສະນາອົບຮົມສູນກາງພັກ, 2016).

ພັກປະຊາຊົນປະຕິວັດລາວ ໄດ້ໃຫ້ຄວາມໝາຍກ່ຽວກັບພະນັກງານໄວ້ວ່າພະນັກງານແມ່ນບຸກຄົນທີ່ມີບົດບາດຕັດສິນຜົນໄດ້, ຜົນເສຍຂອງແນວທາງສໍາຄັນ ແລະ ເປັນບັນຫາຍຸດທະສາດຂອງການປະຕິວັດ, ພັກຕ້ອງກໍາໂດຍກົງຮອບດ້ານ ແລະ ເດັດຂາດບໍ່ປ່ອຍ ໃຫ້ຊົນຊັ້ນອື່ນ, ຄົນອື່ນມາກໍາເອົາພະນັກງານຂອງພວກເຮົາຢ່າງເດັດຂາດ. ພະນັກງານແມ່ນຜູ້ທີ່ນໍາເອົາ ແນວທາງການເມືອງຂອງພັກໄປຈັດຕັ້ງຜັນຂະຫຍາຍໃຫ້ປາກົດຜົນເປັນຈິງ, ວຽກງານພະນັກງານເປັນວິ ທະຍາສາດໜຶ່ງທີ່ມີຊີວິດຊີ ວາ, ເປັນວຽກທີ່ຕ້ອງເຮັດຢ່າງລຽນຕິດ-ຕໍ່ເນື່ອງ, ເຮັດຢ່າງມີແຜນການ, ມີຈຸດສຸມ ແລະ ດໍາເນີນໄປຢ່າງເປັນລະບົບຄົບຊຸດ ແລະ ຖືກຕ້ອງຕາມລະບຽບກົດໝາຍຂອງລັດ (ກົມການເມືອງສູນກາງພັກ, 2021).

ມາກ-ເລນິນ ໃຫ້ເນື້ອໃນທິດສະດີກ່ຽວກັບພະນັກງານວ່າແມ່ນຜູ້ຕັດສິນຜົນໄດ້ຜົນເສຍໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ.ດັ່ງນັ້ນ, ຕໍ່ກັບບັນຫານີ້ການນໍາໃຊ້ພະນັກງານ ຈຶ່ງເປັນວຽກງານທີ່ຈະຕ້ອງໄດ້ເອົາໃຈໃສ່ ບັນດາພັກການເມືອງທີ່ຈະເຂົ້າຮ່ວມສາກົນຄອມມູຍນິດຈະຕ້ອງໄດ້ຮັບການກໍ່ສ້າງ

ຕາມຫຼັກການລວມສູນປະຊາທິປະໄຕ, ໄລຍະສົງຄາມກາງເມືອງອັນດຸເດືອດໃນປັດຈຸບັນພັກຄອມມຸຍນິດອາດສາມາດຈະສຳເລັດໜ້າທີ່ການເມືອງຂອງຕົນໄດ້ຖ້າພັກໄດ້ຮັບການຈັດຕັ້ງລວມສູນທີ່ສຸດ, ຖ້າພາຍໃນພັກຫາກມີກົດລະບຽບຫຼັກການຄ້າຍຄືກົດລະບຽບທະຫານ ແລະ ຖ້າສູນກາງພັກແມ່ນອົງການທີ່ມີອິດທິພົນແຂງແກ່ນ, ມີສິດອຳນາດກວ້າງຂວາງ, ໄດ້ຮັບຄວາມເຊື່ອໝັ້ນຈາກສະມາຊິກພັກທຸກທີ່ວໜ້າການຈັດການພະນັກງານຫຼືຊັບພະຍາກອນມະນຸດກໍເຊັ່ນກັນ (Marxist and Lenin ອ້າງໃນ ນິພົນເລືອກເຟັ້ນ2 ປະທານໄກສອນ ພົມວິຫານ, 1986).

ຈາກຄວາມເຫດຜົນ ແລະ ຄວາມສຳຄັນດັ່ງກ່າວເຫັນວ່າ ພະນັກງານ ຫຼື ພະນັກງານໜຸ່ມແມ່ນກຸ່ມຄົນສຳຄັນ ແມ່ນທຶນຮອດຂອງຊາດທີ່ແທ້ຈິງ ແຕ່ໃນໄລຍະຜ່ານມາ ການກໍ່ສ້າງ ແລະ ບຳລຸງພະນັກງານໜຸ່ມນ້ອຍ ບາງສ່ວນກໍຍັງບໍ່ທັນໄດ້ຮັບຜົນສຳເລັດເທົ່າທີ່ຄວນ. ແຕ່ເຖິງຢ່າງໃດກໍດີ, ເຫັນວ່າ ສ່ວນຫຼາຍກໍເຫັນວ່າ ການກໍ່ສ້າງ ແລະ ບຳລຸງພະນັກງານໜຸ່ມກໍມີຜົນສຳເລັດຫຼາຍເຊັ່ນກັນ, ເວົ້າໄດ້ວ່າ ການກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກພັກໜຸ່ມຂອງພັກປະຊາຊົນປະຕິວັດລາວ ກໍໄດ້ຮັບຜົນສຳເລັດຫຼາຍສົມຄວນ, ຈຶ່ງເຫັນວ່າ ການສຶກສາ ຜົນສຳເລັດການກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກພັກໜຸ່ມຂອງພັກປະຊາຊົນປະຕິວັດລາວ ເປັນອີກປະເດັນໜຶ່ງທີ່ຈະສາມາດຮັບຮູ້ໄດ້ເຖິງຂະບວນການບຳລຸງກໍ່ສ້າງພະນັກງານ-ສະມາຊິກພັກໜຸ່ມຂອງພັກປະຊາຊົນປະຕິວັດລາວ ໄດ້ຮັບຜົນສຳເລັດໃນລະດັບໃດ.

**ຈຸດປະສົງ**

ໃນການສຶກສາເລື່ອງນີ້ແມ່ນມີຈຸດປະສົງສຶກສາຜົນສຳເລັດການກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກພັກໜຸ່ມຂອງພັກປະຊາຊົນປະຕິວັດລາວ, ບັນຫາແລະແນວທາງໃນຕໍ່ໜ້າ.

**ທົບທວນເອກະສານທີ່ກ່ຽວຂ້ອງ**

**ຄວາມຮັບຮູ້ ກ່ຽວກັບການກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກພັກໜຸ່ມ ຂອງພັກປະຊາຊົນປະຕິວັດລາວ**

1). ຄວາມຮັບຮູ້ ກ່ຽວກັບພັກປະຊາຊົນປະຕິວັດລາວ

ພັກປະຊາຊົນປະຕິວັດລາວ ແມ່ນກອງນຳໜ້າທີ່ມີການຈັດຕັ້ງໜາແໜ້ນທີ່ສຸດ, ເປັນອົງການຈັດຕັ້ງການເມືອງສູງສຸດຂອງຊົນຊັ້ນກຳກຳມະກອນ ແລະ ຊາວຜູ້ອອກແຮງງານລາວບັນດາເຜົ່າ, ເປັນທີ່ວແທນທີ່ຈົງຮັກພັກດີຕໍ່ສິດຜົນ ປະໂຫຍດຂອງຊົນຊັ້ນກຳມະກອນຊາວຜູ້ອອກແຮງງານລາວທີ່ຮັກຊາດ ແລະຂອງຊາດລາວທັງໝົດ; ພັກປະກອບດ້ວຍບຸກຄົນທີ່ຕື່ນຕົວ, ຫ້າວຫັນປະຕິວັດ, ດີເດັ່ນກວ່າໝູ່ ແລະໄດ້ຮັບຄວາມໄວ້ວາງໃຈກວ່າໝູ່ໃນຊົນຊັ້ນກຳມະກອນ, ຊາວກະສິກອນ, ປັນຍາຊົນປະຕິວັດ ແລະຊັ້ນຄົນຜູ້ອອກແຮງງານອື່ນໃນເຜົ່າຕ່າງໆ, ໄດ້ຜ່ານການທົດສອບໃນຂະບວນການປົກປັກຮັກສາ ແລະພັດທະນາປະເທດຊາດ ມີຄວາມສະມັກໃຈເຂົ້າໃນອົງການຂັດຕັ້ງຂອງພັກ ເພື່ອສູ້ຊົນປະຕິບັດວັດຖຸປະສົງ ແລະ ອຸດົມການຂອງພັກ ຢ່າງສຸດກົກສຸດປາຍ; ພັກເຮົາຍຶດໝັ້ນລັດທິມາກ-ເລນິນ, ແນວຄິດ ໄກສອນ ພົມ ວິຫານ ແລະມູນເຊື້ອອັນດີງາມຂອງພັກ ເປັນພື້ນຖານທາງດ້ານແນວຄິດ, ທິດສະດີຂອງພັກ, ເປັນເຂັມຊີ້ທິດໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງພັກ.

2) ຄວາມຮັບຮູ້ ກ່ຽວກັບພະນັກງານ-ສະມາຊິກພັກ.

ພະນັກງານ-ສະມາຊິກພັກ ແມ່ນພົນລະເມືອງລາວ, ແມ່ນບຸກຄົນທີ່ຫ້າວຫັນ, ຕັ້ງໜ້າຝຶກຝົນຫຼໍ່ຫຼອມຕົນເອງ, ຊອກຮູ້ຮ່ຳຮຽນ, ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດດີ, ມີນ້ຳໃຈຮັກຊາດອັນດູດດື່ມ ສົມທົບກັບນ້ຳໃຈສາກົນກຳມາຊີບອັນຜ່ອງໃສ, ຈິງໃຈຮັບໃຊ້ປະຊາຊົນ, ນັບຖືການຈັດຕັ້ງ ແລະ ມີລະບຽບວິໄນເຂັ້ມງວດ, ເປັນແບບຢ່າງນຳໜ້າໃນການປະຕິບັດໜ້າທີ່ວຽກງານ, ພົວພັນສະໜິດແໜ້ນກັບມະຫາຊົນ, ມີແບບ ແຜນການດຳລົງຊີວິດທີ່ສົດໃສ-ກ້າວໜ້າ, ຍອມເສຍສະຫຼະຜົນປະໂຫຍດສ່ວນຕົວ ແລະ ເຮັດສຳເລັດໜ້າທີ່ການເມືອງ ທີ່ໄດ້ຮັບການມອບໝາຍ.

ສະນັ້ນ, ພະນັກງານ-ສະມາຊິກພັກໜຸ່ມ ແມ່ນທຶນຮອນອັນປະເສີດ, ເປັນຊັບພະຍາກອນອັນລ້ຳຄ່າຂອງພັກ,ຂອງຊາດ, ແມ່ນຖັນແຖວ ແລະ ບຸກຄົນພະນັກງານ-ສະມາຊກິພັກມີໜຸ່ມແໜ້ນ, ມີຄວາມຮູ້, ຄວາມສາມາດດ້ານວິ ຊາການ ໃນລະດັບອັນແນ່ນອນ, ມີຄວາມຈົງຮັກພັກດີຕໍ່ພັກ-ລັດ ແລະ ປະຊາຊົນພ້ອມທັງກຽມເງື່ອນໄຂທຸກຢ່າງ ທີ່ຈະກ້າວຂຶ້ນເປັນພະນັກງານນຳພາ-ຄຸ້ມຄອງ ແລະ ເປັນຜູ້ທີ່ຈະສືບທອດພາລະ ກິດປະຕິວັດໃນອານາຄົດ, ແມ່ນຜູ້ທີ່ມີຄວາມໜຸ່ມແໜ້ນ, ວ່ອງໄວ, ສຸຂະພາບແຂງແຮງ, ເກນອາຍຸຢູ່ໃນໄລຍະທີ່ກຳລັງຈະເລີນພັນເຕີບໂຕ, ອະໄວຍະວະທຸກພາກສ່ວນ ໄດ້ມີການຂະຫຍາຍຕົວ ບໍ່ວ່າທາງດ້ານຮ່າງກາຍ ແລະ ມັນສະໝອງ, ອາລົມຈິດທີ່ຮ້ອນແຮງ, ປ່ຽນແປງງ່າຍ, ມີຄວາມຕ້ອງການສະແຫວງຫາຄວາມກ້າວໜ້າ, ມັກສິ່ງທ້າທາຍ, ມີຄວາມຢາກຮູ້, ຢາກເຫັນ, ຢາກທົດລອງ ແລະ ມີຄວາມພ້ອມຮັບເອົາສິ່ງໃໝ່ໆ ໄດ້ຢ່າງໄວວາ.

3) ຄວາມຮັບຮູ້ ກ່ຽວກັບການກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກພັກໜຸ່ມ

ການກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກພັກໜຸ່ມ ແມ່ນ

ການເຄື່ອນໄຫວຂອງການຈັດຕັ້ງພັກ-ລັດ ກ່ຽວກັບການກໍ່ສ້າງ, ບໍາລຸງ, ສຶກສາອົບຮົມ, ຝຶກຝົນຫຼໍ່ຫຼອມ ແລະຍົກລະດັບໃນດ້ານຕ່າງໆ ໃຫ້ພະນັກງານ-ສະມາຊິກພັກໜຸ່ມ ເພື່ອຮອງຮັບໜ້າທີການເມືອງ ທີ່ການຈັດຕັ້ງພັກ-ລັດມອບໝາຍໃຫ້, ເຊິ່ງໃນນັ້ນ ການກໍ່ສ້າງພະນັກງານ-ສະມາຊິກພັກໜຸ່ມ ແມ່ນຈະນໍາໃຊ້ເວລາ ນັບແຕ່ 1 ປີຂຶ້ນໄປ; ສ່ວນການບໍາລຸງພະນັກງານ-ສະມາຊິກພັກໜຸ່ມ ແມ່ນຈະໄດ້ເວລາສັ້ນ ນັບແຕ່ 5 ມື້ຫາ 1 ປີ.

4) ເນື້ອໃນການກໍ່ສ້າງ, ບໍາລຸງພະນັກງານ-ສະມາຊິກພັກໜຸ່ມ ຂອງພັກປະຊາຊົນປະຕິວັດລາວ

ບົນພື້ນຖານໜ້າທີ່ການເມືອງ ແລະ ຄວາມຮຽກຮ້ອງຕ້ອງການໃນເງື່ອນໄຂເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ການກໍ່ສ້າງ, ບໍາລຸງພະນັກງານ-ສະມາຊິກພັກໜຸ່ມ ຢູ່ ສປປ ລາວ ໃນໄລຍະຜ່ານມາ ໄດ້ສຸມໃສ່ກໍ່ສ້າງ, ບໍາລຸງພະ ນັກງານ-ສະມາຊິກພັກໜຸ່ມ ທາງດ້ານຄຸນທາດການເມືອງ, ຄຸນສົມບັດສິນທໍາປະຕິວັດ, ຄວາມຮູ້-ຄວາມສາມາດ, ດ້ານວິຊາສະເພາະ, ພາວະຄວາມເປັນຜູ້ນໍາ ແລະພາສາຕ່າງປະເທດ

**ຄວາມສໍາຄັນ ໃນການກໍ່ສ້າງ, ບໍາລຸງພະນັກງານ-ສະມາຊິກພັກໜຸ່ມ**

ການກໍ່ສ້າງ, ບໍາລຸງພະນັກງານ-ສະມາຊິກພັກໜຸ່ມ ມີຄວາມສໍາຄັນຕໍ່ການສ້າງ ແລະ ປັບປຸງພາຍໃນພັກ ກາຍເປັນກໍາລັງສືບທອດທີ່ເຂັ້ມແຂງ, ມີຄວາມສໍາຄັນຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃຫ້ປະກົດຜົນເປັນຈິງ, ມີຄວາມສໍາຄັນໃນການສະກັດກັ້ນ ແລະ ຕ້ານປະກົດການຫຍໍ້ທໍ້ຕ່າງໆ ທີ່ເກີດຂຶ້ນ ແລະ ອາດຈະເກີດຂຶ້ນ ຢູ່ພາຍໃນພະນັກງານ-ສະມາຊິກພັກ ແລະ ບັນດາການຈັດຕັ້ງ ໃນລະບົບການເມືອງ ຢ່າງທັນການ.

**ແນວຄວາມຄິດການພັດທະນາບຸກຄະລາກອນ**

ການພັດທະນາບຸກຄະລາກອນ ເປັນເລື່ອງລະອຽດອ່ອນຂອງແຕ່ລະອົງກອນ ເຊິ່ງເປັນເລື່ອງທີ່ຜູ້ບໍລິຫານຕ້ອງໄດ້ເອົາໃຈໃສ່ຢ່າງເປັນຂັ້ນຕອນ ເພາະວ່າ ມັນເປັນເລື່ອງກ່ຽວກັບຄົນ, ເປັນການບໍລິຫານຄົນ ເຊິ່ງມີນັກວິຊາການຫຼາຍທ່ານໄດ້ໃຫ້ນິຍາມກ່ຽວກັບການພັດທະນາບຸກຄະລາກອນດັ່ງນີ້:

ການພັດທະນາບຸກຄະລາກອນ ໝາຍເຖິງຂະບວນການທີ່ສ້າງພະນັກງານພາຍໃນອົງກອນໃຫ້ມີຄວາມຮູ້, ຄວາມສາມາດ ເພື່ອພັດທະນາອົງກອນຕົນເອງ ເນື່ອງຈາກວ່າທຸກອົງກອນ ຖ້າມີບຸກຄະລາກອນເກັ່ງ, ດີ ແລະ ຊື່ສັດແມ່ນຈະເຮັດໃຫ້ອົງກອນໄດ້ຮັບພັດທະນາໄວ ແລະ ມີປະສິດ ທິພາບ (ປະຊຸມ ລອດປະເສີດ, 1987).

ການພັດທະນາບຸກຄະລາກອນແມ່ນປະກອບມີຫຼັກການສໍາຄັນຫຼາຍຢ່າງ ດັ່ງນີ້:

(1) ຕ້ອງມີການສຶກສາຄວາມຈໍາເປັນ ແລະ ຄວາມຕ້ອງການໃນການຮຽນຮູ້ຂອງບຸກຄະລາກອນ.

(2) ຕ້ອງຍອມຮັບຄວາມແຕກຕ່າງລະຫວ່າງບຸກຄົນໃນເລື່ອງວິທີການຮຽນຮູ້ ແລະ ອັດຕາການຮຽນຮູ້.

(3) ວິທີການຮຽນຮູ້ຄວນເນັ້ນການແກ້ໄຂບັນຫາການປະຕິບັດງານ ແລະ ການສ້າງທັກສະທີ່ກ່ຽວຂ້ອງ ແລະ ໄດ້ຜົນໄວ.

(4) ຄວນມີການປຶກສາຫາລືຮ່ວມກັນໃນການກໍານົດຈຸດປະສົງການຮຽນຮູ້ທີ່ຊັດເຈນລ່ວງໜ້າ.

(5) ການປະເມີນຜົນຂອງການພັດທະນາບຸກຄະລາກອນຄວນວາງຢູ່ບົນພື້ນຖານຂອງການວິເຄາະຄວາມຕ້ອງການ ແລະ ການຊີ້ບອກຕາມຈຸດປະສົງຂອງໂຄງການ, ການພັດທະນາບຸກຄະລາກອນອົງການ ຫຼື ໜ່ວຍງານສາມາດເຮັດໄດ້ຫຼາຍວິທີທັງນີ້ຂຶ້ນກັບລັກສະນະຂອງວຽກ, ໄລຍະເວລາ, ບຸກຄະລາກອນ ແລະ ປັດໄຈອື່ນໆທີ່ປະກອບດ້ວຍ (ວິລະຍຸດ ຫຼໍ່ເລີດລັດ, 1988).

ການພັດທະນາບຸກຄະລາກອນ ໝາຍເຖິງຂະບວນການສົ່ງເສີມບຸກຄະລາກອນທີ່ປະຕິບັດງານຢູ່ແລ້ວໄດ້ເພີ່ມຄວາມຮູ້, ຄວາມຊໍານານ, ຄວາມສາມາດ, ທັດສະ, ທັດສະນະຄະຕິ ແລະ ອຸປະນິໄສເພື່ອໃຫ້ປະຕິບັດງານໄດ້ຢ່າງຖືກຕ້ອງ, ມີປະສິດທິພາບໂດຍໃຫ້ການສຶກສາ, ການຝຶກອົບຮົມຕະຫຼອດເຖິງກິດຈະກໍາອື່ນໆແກ່ບຸກຄະລາກອນ (ວັດຖາ ລິ່ມສະກຸນ, 1984).

ການພັດທະນາບຸກຄະລາກອນຄື ການດໍາເນີນການເພີ່ມຄວາມຮູ້, ຄວາມສາມາດ ແລະ ທັດ ສະນະຄະຕິທີ່ຫຼາຍຕໍ່ການປະຕິບັດງານທີ່ຕົນຮັບຜິດຊອບໃຫ້ມີຄຸນນະພາບ, ປະສົບຜົນສໍາເລັດ, ເປັນທີ່ພໍໃຈແກ່ອົງການ (ວົງ ສານສີຣິ, 1995).

ສະຫຼຸບໄດ້ວ່າ ການພັດທະນາບຸກຄະລາກອນ ໝາຍເຖິງການເພີ່ມທັກສະ, ຄວາມຮູ້, ຄວາມສາມາດ, ການສົ່ງເສີມວິຊາສະເພາະໃຫ້ບຸກຄະລາກອນ ດ້ວຍວິທີການຕ່າງໆເຊັ່ນການຝຶກອົບຮົມ, ການສົ່ງໄປຮໍ່າຮຽນຕໍ່ວິຊາສະເພາະທີ່ບຸກຄະລາກອນມີ ເພື່ອໃຫ້ເຂົາເຈົ້າມີຄວາມຊ່ຽວຊານຫຼາຍຂຶ້ນກວ່າເກົ່າ ແລະ ສາມາດນໍາໃຊ້ໃນການພັດທະນາອົງກອນໄດ້ດີຂຶ້ນກວ່າເກົ່າ.

**ທິດສະດີພະນັກງານ**

ການຈັດວາງພະນັກງານສະມາຊິກພັກແມ່ນວຽກງານໜຶ່ງທີ່ສໍາຄັນ ແລະຈໍາເປັນເພື່ອຮັບ ປະກັນຜົນສໍາເລັດຂອງວຽກງານ. ທິດສະດີຂອງທ່ານໂຮ່ຈິມິນກ່ຽວກັບພະນັກງານເພິ່ນໄດ້ຊີ້ແຈງໃຫ້ເຫັນເຖິງການຈັດວາງພະນັກງານແຕ່ລະປະເພດ ເຊິ່ງການຈັດວາງພະນັກງານທີ່ເປັນສະມາຊິກພັກນັ້ນແມ່ນເພື່ອ

ເຮັດໃຫ້ປະສິດທິພາບຂອງການດຳເນີນວຽກງານ ແລະ ຄວາມເຂັ້ມແຂງຂອງພະນັກງານເອງໃນແຕ່ລະຂະແໜງການນັ້ນໆ ໂດຍສະເພາະແມ່ນອົງກອນລັດ ນັບທັງທາງດ້ານການເມືອງ-ແນວຄິດ, ຄວາມຮູ້, ຄວາມສາມາດທາງດ້ານວິຊາສະເພາະ ແລະ ຄຸນສົມບັດສິນທຳປະຕິວັດ ເຊິ່ງມັນກຳລັງຮຽກຮ້ອງໃຫ້ມີການຈັດວາງພະນັກງານໃຫ້ເໝາະສົມທັງໃນສະເພາະໜ້າ ແລະ ຍາວນານ ເພື່ອຮັບປະກັນການສືບທອດ (Ho Chi Minh, 1920).

ພະນັກງານເປັນທຶນຮອນອັນປະເສີດທີ່ສຸດຂອງພັກ, ເປັນຜູ້ນຳພາປະຊາຊົນເປັນຜູ້ຮັບໃຊ້ປະຊາ ຊົນ, ເປັນຂົວຕໍ່ລະຫວ່າງພັກກັບປະຊາຊົນ ໂດຍວິວັນ ຈັນທະໂຄດໄດ້ມີຄວາມຄິດເຫັນຕໍ່ກັບທິດສະດີພະນັກງານວ່າ ພະນັກງານມີຄວາມສຳພັນກັບວຽກ ຕ້ອງເບິ່ງວຽກເພື່ອຈັດວາງພະນັກງານໃສ່ຫາກບໍ່ແມ່ນຈັດຫາວຽກງານໃຫ້ແບບເຫັນແກ່ກັນ (ວິວັນ ຈັນທະໂຄດ, 2012).

ມາກ-ເລນິນ ໃຫ້ທັດສະນະວ່າ ພະນັກງານຄືກຸ່ມຄົນ ຫຼື ບຸກຄົນທີ່ຕັດສິນຜົນປະໂຫຍດໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ ດັ່ງນັ້ນ, ການປະຕິບັດໜ້າທີ່ຂອງພະນັກງານແມ່ນເປັນເລື່ອງສຳຄັນທີ່ການຈັດຕັ້ງຕ້ອງໄດ້ເອົາໃຈໃສ່ຢ່າງດີ ລວມເຖິງການເປັນຢູ່ ແລະ ການຈັດວາງພະນັກງານໃນຕຳ ແໜ່ງງານຕ່າງໆ ເພື່ອເຮັດໃຫ້ພະນັກງານມີຄວາມພໍໃຈ ແລະ ມີຄວາມສຸກໃຈໃນການເຮັດວຽກ ໂດຍສະເພາະແມ່ນວຽກບໍລິການຍິ່ງມີຄວາມສຳຄັນຫຼາຍ ທີ່ຈະສ້າງພາບພົດໃຫ້ອົງກອນເປັນທີ່ຍອມຮັບໄດ້ (Marxist and Lenin ອ້າງໃນນິພົນເລືອກເຟັ້ນ2 ປະທານໄກສອນ ພົມວິຫານ, 1986).

ໄກສອນ ພົມວິຫານ ສະເໜີວ່າ ພະນັກງານແມ່ນບຸກຄົນທີ່ຈະນຳພາວຽກງານທຸກຢ່າງໃນອົງກອນກ້າວສູ່ຄວາມງອກງາມ, ພະນັກງານຄືຜູ້ຕັດສິນຜົນໄດ້ຜົນເສຍຂອງອົງກອນນັ້ນໆ ຖ້າພະນັກ ງານຫາກໄດ້ຮັບການສຶກສາອົບຮົມທີ່ສຸກງອມ ກໍຈະເຮັດໃຫ້ການພັດທະນາວຽກງານນັ້ນປະສົບຜົນສຳເລັດໄດ້ດີ ແລະ ມີໃບໜ້າທີ່ສວຍງາມໄດ້ (ປະທານ ໄກສອນ ພົມວິຫານ, 1986).

ສາມາດໄຈ້ແຍກ ແລະ ຢັ້ງຢືນໃຫ້ເຫັນໄດ້ຢ່າງຊັດເຈນວ່າ: ພະນັກງານແມ່ນມາດຕະເກນໜຶ່ງທີ່ນຳໃຊ້ເພື່ອຊີ້ບອກເຖິງໝົດທຸກຄົນທີ່ເຮັດວຽກຢູ່ໃນອົງການຈັດຕັ້ງຂອງພັກ, ຂອງລັດ, ບັນດາອົງການຈັດຕັ້ງມະຫາຊົນ, ກຳລັງປະກອບອາ ວຸດ, ເຊິ່ງລວມມີທັງຜູ້ມີຖານະຕຳແໜ່ງນຳພາ-ຄຸ້ມຄອງ ແລະ ຜູ້ທີ່ເຮັດວຽກວິຊາການຕ່າງໆ ທີ່ມີຄວາມຈຳເປັນຕ້ອງພັດທະນາຕາມຍຸກຕາມສະໄໝ.

**ນະໂຍບາຍຂອງພັກກ່ຽວກັບວຽກງານການຄຸ້ມຄອງພະນັກງານ**

ການຄຸ້ມຄອງ, ການປ້ອງກັນ ແລະ ການປະຕິບັດນະໂຍບາຍ. ພະນັກງານເຮົາຕ້ອງພ້ອມກັນຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດຢ່າງເປັນຮູບປະທຳ, ດ້ວຍເຫດນັ້ນການຄຸ້ມຄອງພະນັກງານຕ້ອງກຳແໜ້ນເນື້ອໃນບາງດ້ານ ດັ່ງນີ້:

1) ການຂຶ້ນແຜນກຳນົດສ້າງພະນັກງານ

ການຂຶ້ນແຜນກຳນົດສ້າງພະນັກງານ ເປັນວຽກງານໜຶ່ງທີ່ສຳຄັນຕົ້ນຕໍຂອງວຽກງານກໍ່ສ້າງພະນັກງານຮັບປະກັນໃຫ້ວຽກງານພະນັກງານເຂົ້າສູ່ລະບອບລະບຽບ, ເປັນເຈົ້າການຕອບສະ ໜອງໜ້າທີ່ວຽກງານການເມືອງໃນສະເພາະໜ້າ ແລະ ຍາວນານ, ມັນແມ່ນການຫັນເປັນອັນລະອຽດແຜນຍຸດທະສາດກ່ຽວກັບວຽກງານພະນັກງານ, ການຂຶ້ນແຜນກຳນົດພະນັກງານແມ່ນການສ້າງໂຄງການສັງລວມໃນການກໍ່ສ້າງຖັນແຖວພະນັກງານ ແລະ ຄາດຄະເນ, ການຊັບຊ້ອນຈັດວາງຖັນແຖວພະນັກງານທັງໝົດຢ່າງເປັນຂັ້ນຕອນລະອຽດ, ສົມເຫດສົມຜົນ, ເປັນພື້ນຖານໃຫ້ແກ່ການກໍ່ສ້າງ ແລະ ບຳລຸງພະນັກງານ, ເປັນການສ້າງພະນັກງານສືບທອດປ່ຽນແທນ.

2) ການບຳລຸງ ແລະ ກໍ່ສ້າງພະນັກງານ

ວຽກງານພະນັກງານ ຕ້ອງໄດ້ເອົາໃຈໃສ່ເປັນພິເສດໃນການກໍ່ສ້າງ ແລະ ບຳລຸງພະນັກ ງານຫຼັກແຫຼ່ງ ໂດຍສະເພາະພະນັກງານຂັ້ນສູນກາງ, ການຄຸ້ມຄອງພະນັກງານສືບທອດການນຳ, ການກໍ່ສ້າງພະນັກງານດັ່ງກ່າວ ໄດ້ດຳເນີນໄປຫຼາຍຮູບການ, ເປັນຕົ້ນແມ່ນການສ້າງພະນັກງານກັບຂະບວນວຽກງານຕົວຈິງ, ຄົ້ນຄວ້າຄັດເລືອກເອົາພະນັກງານໄປຮຽນຢູ່ພາຍໃນ ແລະ ຕ່າງປະເທດ, ການຈັດຕັ້ງໄປຄົ້ນຄວ້າຖອດຖອນບົດຮຽນທາງດ້ານທິດສະດີ ແລະ ພຶດຕິກຳຕົວຈິງຢູ່ບັນດາປະເທດເພື່ອນມິດ, ຈັດຕັ້ງປາຖະກະຖາໃນບາງຫົວຂໍ້ກ່ຽວກັບບັນຫາໃໝ່ ແລະ ອື່ນໆ.

3) ການຊັບຊ້ອນຈັດວາງ ແລະ ນຳໃຊ້ພະນັກງານ

ການຊັບຊ້ອນຈັດວາງ ແລະ ການນຳໃຊ້ພະນັກງານແມ່ນວຽກງານໜຶ່ງຂອງກົງຈັກການຈັດຕັ້ງຂອງພັກ-ລັດ, ໃນການແຕ່ງຕັ້ງຍົກຍ້າຍ, ສັບປ່ຽນໜ້າທີ່, ບ່ອນປະຈຳການຂອງພະນັກງານແມ່ນລັກສະນະທົ່ວໄປປົກກະຕິຂອງພະນັກງານໃນລະບົບການຈັດຕັ້ງຂອງພັກ-ລັດ ແລະ ອົງການຈັດຕັ້ງມະຫາຊົນ, ແມ່ນການໝູນວຽນສັບປ່ຽນການດຳລົງຕຳແໜ່ງງານ, ຈາກບ່ອນເກົ່າໄປຮັບຜິດຊອບໜ້າທີ່ ແລະ ຕຳແໜ່ງຢູ່ບ່ອນໃໝ່ ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ, ທັງເປັນການດຸ່ນດ່ຽງກຳລັງພະນັກງານຕາມໜ້າທີ່ຕຳແໜ່ງຢູ່ໃນແຕ່ລະພາກສ່ວນນັບແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນ, ຮັບ ປະກັນລັກສະນະສືບທອດຕໍ່ເນື່ອງ, ເຮັດໃຫ້ການຈັດຕັ້ງຢູ່ແຕ່ລະຂັ້ນ, ຂະ ແໜງການຕ່າງໆມີສະຖຽນລະພາບ, ມີການເຄື່ອນໄຫວຢ່າງຕັ້ງໜ້າ ແລະ ມີປະສິດທິພາບສູງ.

4) ການປະຕິບັດນະໂຍບາຍຕໍ່ພະນັກງານ

ວຽກງານນະໂຍບາຍຕໍ່ພະນັກງານກໍແມ່ນວຽກງານໜຶ່ງທີ່ສໍາຄັນ ເພາະວ່າມັນມີການພົວ ພັນຊ່ວຍກະຕຸກຊຸກຍູ້ໃຫ້ການປະຕິບັດໜ້າທີ່ວຽກງານຂອງພະນັກງານ ຕະຫຼອດຮອດການເປັນຢູ່ຂອງພະ ນັກງານ, ສ້າງເງື່ອນໄຂໃຫ້ພະນັກງານທຸກເພດທຸກເຜົ່າໄດ້ຮັບການພັດທະນາທາງດ້ານການເມືອງ,ແນວຄິດ, ຄວາມຮູ້, ຄວາມສາມາດຍົກລະດັບດ້ານວິຊາສະເພາະ, ລວມທັງການຍ້ອງຍໍ ແລະ ທາງສະຫວັດດີການສັງຄົມຕ່າງໆ ຕາມລະບຽບກົດໝາຍ ເພາະວ່າມັນເປັນການກະຕຸກຊຸກຍູ້ຕໍ່ຜົນສໍາເລັດໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງພັກວາງອອກໃນແຕ່ລະໄລຍະຂອງການປະຕິວັດ.

5) ການປະເມີນ ແລະ ຈັດປະເພດພະນັກງານ

ການຕີລາຄາພະນັກງານເປັນວຽກງານໜຶ່ງທີ່ສໍາຄັນ, ເພາະວ່າມັນພົວພັນເຖິງປະໂຫຍດ ທາງການເມືອງ, ຊາຕາກໍາຂອງພະນັກງານ ຖ້າຕີລາຄາຜິດພາດຈະພາໃຫ້ເສຍພະນັກງານຜູ້ທີ່ດີ, ເປັນຊ່ອງວ່າງແກ່ພວກຄົນບໍ່ດີໂຈມຕີການນໍາພາຂອງພັກ, ແບ່ງແຍກຄວາມສາມັກຄີໃນຖັນແຖວພະນັກງານ, ການຕີລາຄາແບ່ງປະເພດພະນັກງານຈະເປັນພື້ນຖານໃຫ້ແກ່ການກໍານົດ, ບັນດາມາດຕະ ການບໍາລຸງ ແລະ ກໍ່ສ້າງແທດຕົວຈິງ, ເປັນບ່ອນອີງອັນຈໍາເປັນໃຫ້ແກ່ການຈັດວາງ, ເລື່ອນຊັ້ນ, ປະຕິບັດວິໄນ ຫຼື ການຍ້ອງຍໍຕ່າງໆ, ຮັບປະກັນເສີມຂະຫຍາຍລັກສະນະຕັ້ງໜ້າ ແລະ ຄຸນນະພາບ ຂອງຖັນແຖວພະນັກງານ, ວຽກງານຕີລາຄາເລືອກເຟັ້ນພະນັກງານເປັນບັນຫາທີ່ສໍາຄັນ, ເປັນວຽກທີ່ຫຍຸ້ງຍາກສັບສົນ ເພາະວ່າການຕີລາຄາພະນັກງານໃຫ້ຖືກຕ້ອງຊັດເຈນ. ຕ້ອງມີທັດສະນະຮອບດ້ານ, ພາວະວິໄສ, ປະຫວັດສາດ ແລະ ຂະຫຍາຍຕົວ.

6) ການຄຸ້ມຄອງ ແລະ ປ້ອງກັນພະນັກງານ

ວຽກງານຄຸ້ມຄອງ ແລະ ປ້ອງກັນພະນັກງານແມ່ນວຽກງານໜຶ່ງທີ່ສໍາຄັນຂອງວຽກງພະນັກງານທັງເປັນຄວາມຮຽກຮ້ອງຕ້ອງການອັນຮີບດ່ວນໃນສະເພາະໜ້າ ແລະ ຍາວນານ, ເພາະມັນແມ່ນວຽກຄຸ້ມຄອງຄົນ ເຊິ່ງແມ່ນສັງລວມການພົວພັນທີ່ສັບສົນ ແລະ ຫຼາຍຮູບ, ຫຼາຍສີ. ສະນັ້ນ, ການຄຸ້ມຄອງພະນັກງານຕ້ອງມີໄຫວພິບ, ເຂັ້ມງວດຈິ່ງຈະມີປະສິດທິພາບ ແລະ ຄຸນນະພາບສູງ (ຄະນະບໍລິການງານສູນກາງພັກ, 2021).

## ວິທີການສຶກສາ

ໃນການສຶກສາເລື່ອງນີ້ແມ່ນມີຈຸດປະສົງສຶກສາ ຜົນສໍາເລັດການກໍ່ສ້າງ, ບໍາລຸງພະນັກງານ-ສະມາຊິກພັກໜຸ່ມຂອງພັກປະຊາຊົນປະຕິວັດລາວ ຜູ້ສຶກສາໄດ້ນໍາໃຊ້ວິທີການສຶກສາແບບຄຸນນະພາບ ໂດຍນໍາໃຊ້ວິທີການສຶກສາເອກະສານຕ່າງໆທີ່ກ່ຽວຂ້ອງກັບການກໍ່ສ້າງ ແລະ ບໍາລຸງພະນັກງານໜຸ່ມຂອງພັກປະຊາຊົນປະຕິວັດລາວ ແລະ ດໍາເນີນການວິ ເຄາະເອກະສານດັ່ງກ່າວ.

## ຜົນການສຶກສາ

### ຜົນສໍາເລັດ ໃນການກໍ່ສ້າງ, ບໍາລຸງພະນັກງານ-ສະມາຊິກພັກໜຸ່ມ ຂອງພັກປະຊາຊົນປະຕິວັດລາວ ໃນໄລຍະຜ່ານມາ

1) ການກໍ່ສ້າງ, ບໍາລຸງພະນັກງານ-ສະມາຊິກພັກໜຸ່ມທາງດ້ານຄຸນທາດການເມືອງ. ຜ່ານມາ ພັກປະຊາຊົນປະຕິວັດລາວໄດ້ເອົາໃຈໃສ່ກໍ່ສ້າງ, ບໍາລຸງພະນັກງານ-ສະມາຊິກພັກໜຸ່ມໃຫ້ມີຄວາມເຊື່ອໝັ້ນຢ່າງຕາຍໃຈ ຕໍ່ອຸດົມການສັງຄົມນິຍົມ, ມີຫຼັກໝັ້ນມິດ-ສັດຕູ ຢ່າງຈະແຈ້ງ, ມີຄວາມຮູ້ເຂົ້າໃຈ ກ່ຽວກັບລັດທິມາກ-ເລນິນ, ແນວທາງ, ແຜນນະໂຍບາຍຂອງພັກ ແລະ ກົດໝາຍຂອງລັດ ຢ່າງເລິກເຊິ່ງ, ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ວຽກງານ, ມີຄວາມເຊື່ອໝັ້ນຢ່າງໜັກແໜ້ນຕໍ່ກໍາລັງແຮງ ແລະ ສະຕິປັນຍາຂອງມະຫາຊົນ, ມີສະຕິເຄົາລົບ ແລະ ປະຕິບັດກົດລະບຽບຂອງພັກ ແລະ ກົດໝາຍຂອງລັດຢ່າງເຂັ້ມງວດ.

2) ການກໍ່ສ້າງ, ບໍາລຸງພະນັກງານ-ສະມາຊິກພັກໜຸ່ມ ທາງດ້ານຄຸນສົມບັດສິນທໍາປະຕິວັດ

ເພື່ອເຮັດໃຫ້ພະນັກງານ-ສະມາຊິກພັກໜຸ່ມ ມີຄຸນສົມບັດສິນທໍາປະຕິວັດດີນັ້ນ ຜ່ານມາ ພວກເຮົາໄດ້ສຸມກໍ່ສ້າງ, ບໍາລຸງພະນັກງານ-ສະມາຊິກພັກໜຸ່ມ ມີນໍ້າໃຈເສຍສະຫຼະເພື່ອຊາດ, ເພື່ອປະຊາຊົນ; ມີນໍ້າໃຈດຸໝັ່ນ, ພາກພຽນ, ປະຢັດ, ຊື່ສັດ ແລະປອດໃສ; ມີລະບຽບວິໄນ ແລະ ເຄົາລົບກົດໝາຍ; ມີຄວາມສາມັກຄີເອື້ອເຟື້ອເຜື່ອແຜ່; ມີນໍ້າໃຈຮັກຊາດອັນດູດດື່ມ, ເສີມຂະຫຍາຍລັດທິລວມໝູ່ ແລະຕ້ານລັດທິເອກະຊົນ; ມີຄວາມສຸພາບຮຽບຮ້ອຍ ແລະເວົ້າແທ້ທໍາຈິງ ແລະຮູ້ບຸກບືນຮຽນຮູ້ ແລະພັດທະນາຕົນເອງ ຢູ່ເລື້ອຍໆ.

ສະນັ້ນ, ຜ່ານການກໍ່ສ້າງ, ບໍາລຸງ, ຝຶກຝົນຫຼໍ່ ຫຼອມພະນັກງານ-ສະມາຊິກພັກໜຸ່ມ ທາງດ້ານຄຸນທາດການ ເມືອງ, ຄຸນສົມບັດສິນທໍາປະຕິວັດ ໃນໄລຍະ 5 ປີ ຜ່ານມາ ໄດ້ມີຖັນແຖວພະນັກງານ, ສະມາຊິກພັກໜຸ່ມ ໄດ້ຮັບການຍ້ອງຍໍສັນລະເສີນ ໃນຂັ້ນຂະບວນການແຂ່ງຂັນຮັກຊາດ, ສ້າງບ້ານພັດທະນາ ແລະ ຜັນຂະຫຍາຍວຽກງານ 3 ສ້າງເຂົ້າສູ່ລວງເລິກທົ່ວປະເທດ ສະແດງອອກ: ຫຼຽນນາມມະຍົດວິລະຊົນແຮງງານຈໍານວນ 1 ຄົນ; ຫຼຽນນາມມະຍົດພັດທະນາດີເດັ່ນແຫ່ງຊາດຈໍານວນ 2 ຄົນ; ຫຼຽນໄຊແຮງງານ ຊັ້ນ I, ຊັ້ນ II ຈໍານວນ 6.168 ຄົນ; ຫຼຽນໄຊແຮງງານ ຊັ້ນ III ຈໍານວນ 10.942 ຄົນ; ຫຼຽນກາແຮງງານ ຈໍານວນ 19.715 ຄົນ; ໃບຍ້ອງຍໍລັດຖະບານ ຈໍານວນ 46.721 ຄົນ.

3) ຜົນສໍາເລັດການກໍ່ສ້າງ, ບໍາລຸງພະນັກງານ-ສະມາຊິກພັກໜຸ່ມ ທາງດ້ານຄວາມຮູ້-ຄວາມສາມາດ ດ້ານວິຊາສະເພາະ ແລະທິດສະດີການເມືອງ: ໃນໄລຍະຜ່ານມາ, ພັກປະຊາຊົນ

ປະຕິວັດລາວ ໄດ້ເອົາໃຈໃສ່ໃນການກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກພັກໜຸ່ມ ທາງດ້ານຄວາມຮູ້, ຄວາມສາມາດ ໃນແຕ່ລະຂົງເຂດວຽກງານ, ແຕ່ລະຂະແໜງການ ຕິດພັນກັບການກໍ່ສ້າງ, ບຳລຸງທາງດ້ານທິດສະດີການເມືອງ ສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ວຽກງານທີ່ຕົນຮັບຜິດຊອບ ໃຫ້ມີປະສິດທິພາບ ແລະປະສິດທິຜົນສູງ ຕາມທິດຫັນເປັນໜຸ່ມເທື່ອລະກ້າວ ຕິດພັນກັບການຫັນເປັນອຸດສະຫະກຳ ແລະທັນສະໄໝ, ເຊິ່ງມີຜົນສຳເລັດດັ່ງນີ້:

- ຜົນສຳເລັດການກໍ່ສ້າງ, ບຳລຸງດ້ານວິຊາສະເພາະ: ການກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກພັກໜຸ່ມດ້ານວິຊາສະເພາະ ໄດ້ເລີ່ມຈາກຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ການເມືອງ, ເລີ່ມຈາກໜ້າທີ່ການເມືອງ ຂອງພັກ-ລັດ, ຮັບປະກັນລັກສະນະສືບທອດປ່ຽນແທນ ບົນພື້ນຖານຕົວເລກການສຶກສາ ຂອງກະຊວງສຶກສາທິການ ແລະ ກິລາ ຄື: ປີ 2018 ໄດ້ສົ່ງພະນັກງານໄປບຳລຸງ-ກໍ່ສ້າງທັງໝົດ 506 ຄົນ, ຍິງ 138 ຄົນ; ໃນປີ 2019 ໄດ້ສົ່ງພະນັກງານໄປບຳລຸງ-ກໍ່ສ້າງທັງໝົດ 514 ຄົນ, ຍິງ 125 ຄົນ; ໃນປີ 2020 ໄດ້ສົ່ງພະນັກງານໄປບຳລຸງ-ກໍ່ສ້າງທັງໝົດ 429 ຄົນ, ຍິງ 115 ຄົນ; ໃນປີ 2021 ໄດ້ສົ່ງພະນັກງານໄປບຳລຸງ-ກໍ່ສ້າງທັງໝົດ 625 ຄົນ, ຍິງ 298 ຄົນ ແລະ ປີ 2022 ໄດ້ສົ່ງພະນັກງານ-ສະມາຊິກພັກໄປກໍ່ສ້າງ, ບຳລຸງດ້ານວິຊາສະເພາະ ຈຳນວນ 996 ຄົນ, ຍິງ 302 ຄົນ.

ນອກນັ້ນ, ຍັງໄດ້ການກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກພັກໜຸ່ມ ຢູ່ສະຖາບັນການເມືອງ ແລະ ການປົກ ຄອງແຫ່ງຊາດ ດ້ວຍບັນດາລະບົບຮຽນ ຄື: ປະລິນຍາໂທ, ປະລິນຍາຕີ, ອະນຸປະລິນຍາ, ຊັ້ນສູງ 5 ເດືອນເລັ່ງລັດ, ລະ ບົບບຳລຸງເລຂາພັກເມືອງ, ບຳລຸງນັກທຸລະກິດໜຸ່ມ... ແນໃສ່ສ້າງໂລກະທັດມາກ-ເລນິນ, ທາດແທ້ຊົນຊັ້ນກຳມະກອນ ແລະອຸດົມການສັງຄົມນິຍົມ ໃຫ້ແກ່ພະນັກງານ-ສະມາຊິກພັກໜຸ່ມ ທີ່ມາສຶກສາຮ່ຳຮຽນ ມີພື້ນຖານທາງດ້ານແນວຄິດປະຕິວັດບຸກ ທີ່ອັນໜັກແໜ້ນ, ສ້າງຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ, ເປັນພື້ນຖານອັນສຳຄັນໃຫ້ແກ່ການເຜີຍແຜ່ແນວທາງການເມືອງຂອງພັກ, ອຸດົມການສັງຄົມນິຍົມ ໃຫ້ແກ່ຜູ້ຮຽນ ແລະ ພຶດຕິກຳຂອງພັກ ກໍຄືບົດຮຽນອັນປະເສີດ ຂອງບັນດາປະເທດສັງຄົມນິຍົມ ເຊິ່ງມັນໄດ້ສະແດງໃຫ້ເຫັນຜົນສຳເລັດແຫ່ງການນຳ ພາປ່ຽນແປງໃໝ່ ຕາມແນວຄິດ, ສີສັນຂອງແຕ່ລະປະເທດ.

4) ຜົນສຳເລັດການກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກພັກໜຸ່ມ ທາງດ້ານພາວະຄວາມເປັນຜູ້ນຳ.

ເພື່ອເຮັດໃຫ້ພະນັກງານ-ສະມາຊິກພັກໜຸ່ມ ໄດ້ຄົ້ນຄວ້າຮ່ຳຮຽນ, ຝຶກຝົນຫຼໍ່ຫຼອມສະພາວະຄວາມເປັນຜູ້ນຳນັ້ນ ຜ່ານມາພວກເຮົາໄດ້ສຸມໃສ່ກໍ່ສ້າງ, ບຳລຸງ ໃຫ້ແກ່ເຂົາເຈົ້າບາງເນື້ອໃນ ຄື: ເຂັ້ມງວດໃນການປະຕິບັດຫຼັກ ການລວມສູນປະຊາທິປະໄຕ, ມອບວຽກໃຫ້ບຸກຄົນຮັບຜິດຊອບ ພ້ອມທັງຕິດຕາມກວດກາ ເພາະຖ້າບໍ່ມີການຕິດຕາມ ກວດກາ ກໍຖືໄດ້ວ່າບໍ່ມີການນຳພາ; ເປັນແບບຢ່າງທີ່ດີ ໃນການປະຕິບັດໜ້າທີ່ວຽກງານ ກໍຄືການດຳລົງຊີວິດ; ມີຄຸນທາດການເມືອງທີ່ໜັກແໜ້ນ (ເວົ້າແລ້ວ ຕ້ອງປະຕິບັດຕາມນັ້ນ); ມີຄວາມຊື່ສັດ, ທ່ຽງທຳ ແລະ ຈິງໃຈ; ຊີ້ນຳຢ່າງຈະແຈ້ງ (ບໍ່ປ່ຽນແປງການຊີ້ນຳເລື້ອຍ); ສາມາດເຕົ້າໂຮມຄວາມສາມັກຄີດີ; ສາມາດຊຸກຍູ້ຄົນຈຳນວນຫຼາຍປະຕິບັດຕາມ, ເຮັດນຳໄດ້; ຮູ້ຈັກເຄົາລົບ ແລະ ໃຫ້ກຽດຜູ້ອື່ນ; ຮູ້ຈັກສົ່ງເສີມຜູ້ອື່ນທີ່ມີອານາຄົດ ແລະ ຮູ້ຍາດແຍ່ງການຊ່ວຍ ເຫຼືອຈາກເພື່ອນມິດສາກົນ.

5) ຜົນສຳເລັດການກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກພັກໜຸ່ມ ດ້ານພາສາຕ່າງປະເທດ.

ບົນພື້ນຖານທີ່ຕັ້ງ, ບົດບາດຂອງ ສປປ ລາວ ແລະ ແນວທາງການຕ່າງປະເທດຂອງພັກ, ຜ່ານມາ ພັກປະຊາ ຊົນປະຕິວັດລາວ ໄດ້ເອົາໃຈໃສ່ໃນການກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກພັກໜຸ່ມ ດ້ານພາສາຕ່າງປະເທດ ໂດຍສະເພາະ ໃນແຕ່ລະປີໄດ້ສົ່ງພະນັກງານ-ສະມາຊິກພັກໜຸ່ມ ໄປຝຶກອົບຮົມພາສາອັງກິດ: ປີ 2018 ຈຳນວນ 35 ຄົນ, ຍິງ 9 ຄົນ; ປີ 2019 ຈຳນວນ 37 ຄົນ, ຍິງ 11 ຄົນ; ປີ 2020 ຈຳນວນ 17 ຄົນ, ຍິງ 7 ຄົນ. ນອກນັ້ນ ຢູ່ບັນດາສຳນັກງານ-ອົງການ, ແຂວງ ແລະ ເມືອງ ຍັງໄດ້ຈັດຕັ້ງຊຸດຝຶກອົບຮົມພາສາຕ່າງປະເທດ: ອັງກິດ, ພາສາຈີນ, ພາສາຫວຽດນາມ... ຕາມເໝາະສົມຂອງແຕ່ລະກະຊວງ-ອົງການ.

**ບັນຫາຕັ້ງຂຶ້ນ ໃນການກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກພັກໜຸ່ມ ຂອງພັກປະຊາຊົນປະຕິວັດລາວ ໃນໄລຍະຜ່ານມາ**

1). ການກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກພັກໜຸ່ມ ບາງຄັ້ງບໍ່ທັນເລີ່ມຈາກໜ້າທີການເມືອງ ແລະບໍ່ທັນຮັບ ປະກັນລັກສະນະເປັນລະບົບຄົບຊຸດ: ການກໍ່ສ້າງ-ບຳລຸງພະນັກງານ-ສະມາຊິກພັກໜຸ່ມຜ່ານມາ ບາງຄັ້ງຍັງເຮັດບໍ່ທັນເຮັດໄດ້ດີ, ບໍ່ທັນຄົບຊຸດ, ບໍ່ທັນເລີ່ມຈາກໜ້າທີ່ການເມືອງ, ບໍ່ແທດເໝາະກັບສະພາບຄວາມເປັນຈິງຂອງອົງການ ແລະ ວຽກງານຕົວຈິງຂອງແຕ່ລະຂົງເຂດວຽກງານ; ການເລືອກເຟັ້ນພະນັກງານ, ສະມາຊິກພັກໜຸ່ມ ໄປກໍ່ສ້າງ, ບຳລຸງຍົກລະດັບໃນດ້ານຕ່າງໆຢູ່ພາຍໃນ ແລະ ຕ່າງປະເທດ ຈຳນວນໜຶ່ງບໍ່ທັນອີງໃສ່ມາດຖານ ແລະ ເງື່ອນໄຂທີ່ໄດ້ກຳນົດໄວ້ຢ່າງເຄັ່ງຄັດ, ບາງຄົນຢູ່ໃນແຜນ ຕໍ່ພັດບໍ່ໄດ້ໄປກໍ່ສ້າງ, ບຳລຸງ ແຕ່ບາງຄົນບໍ່ທັນຢູ່ໃນແຜນ ແຕ່ພັດໄດໄປກໍ່ສ້າງ, ບຳລຸງ... ສະນັ້ນ, ຈຶ່ງພົບຂໍຫຍຸ້ງຍາພາຍຫຼັງທີ່ຮຽນຈົບມາແລ້ວພັດນຳໃຊ້ຍາກ ເພາະບໍ່ທັນຢູ່ໃນແຜນກຳນົດ.

2). ການເລືອກເຟັ້ນເອົາພະນັກງານ-ສະມາຊິກພັກໜຸ່ມ ໄປກໍ່ສ້າງ-ບຳລຸງ ຍັງເຮັດບໍ່ທັນໄປຕາມແຜນກຳນົດ: ການຂຶ້ນແຜນກຳນົດແຜນກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກພັກໜຸ່ມ ຍັງບໍ່ທັນເຮັດໄດ້ດີ, ບໍ່ທັນເປັນແຜນການລະ ອຽດ ແລະທົ່ວເຖິງ, ແຕ່ລະປະເພດພະນັກງານ, ສະມາຊິກພັກ ວ່າຄວນກໍ່ສ້າງ, ບຳລຸງແນວໃດ, ຈຳນວນເທົ່າໃດ ເຊັ່ນ: ວິຊາສະເພາະເທົ່າໃດ, ລະດັບທິດສະດີການເມືອງ-ການປົກຄອງເທົ່າໃດ ແລະວິຊາການອື່ນ ທີ່ເຫັນວ່າ ມີຄວາມຕ້ອງ ການເທົ່າໃດໃນແຕ່ລະປີ, ຍັງອີງໃສ່ແຕ່ແຜນຂອງຂັ້ນເທິງສົ່ງໃຫ້ ຈຶ່ງຈັດພະນັກງານ, ສະມາຊິກພັກໜຸ່ມໄປຕາມນັ້ນ, ບໍ່ທັນຂຶ້ນເປັນເປົ້າໝາຍ ຂອງພະນັກງານ, ສະມາຊິກພັກແຕ່ລະປີ ເພື່ອໃຫ້ສອດຄ່ອງກັບລະດັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ໃນແຕ່ລະຂົງເຂດວຽກງານ ແລະ ຮັບປະກັນໃຫ້ມີພະນັກງານຮຸ່ນສືບທອດປ່ຽນແທນ, ຂາດລັກສະນະເປັນລະບົບ ແລະ ຕໍ່ເນື່ອງ.

3). ການກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກພັກໜຸ່ມ ທາງດ້ານພາສາຕ່າງປະເທດ ຍັງບໍ່ທັນໄດ້ດີ: ການສ້າງແຜນກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກພັກໜຸ່ມ ທາງດ້ານພາສາຕ່າງປະເທດ ຍັງເຮັດບໍ່ທັນໄດ້ດີ, ຕົວເລກ, ງົບປະ ມານຍັງຈຳກັດ, ເນື້ອໃນ, ຮູບການ ແລະວິທີການກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກພັກໜຸ່ມ ຍັງບໍ່ທັນອຸດົມສົມບູນ, ສ່ວນຫຼາຍມີແຕ່ກໍ່ສ້າງ, ບຳລຸງຢູ່ພາຍໃນປະເທດ ຍັງຂາດຕົວ ແລະ ງົບປະມານ ເພື່ອສົ່ງພະນັກງານ-ສະມາຊິກພັກທາງດ້ານພາສາຕ່າງປະເທດ ຢູ່ຕ່າງປະເທດ ເພື່ອຍົກລະດັບຊ່ຽວຊານທາງດ້ານພາສາ.

4). ການຕິດຕາມ, ກວດກາ, ຕີລາຄາປະເມີນຜົນພະນັກງານ-ສະມາຊິກພັກໜຸ່ມ ພາຍຫຼັງໄປກໍ່ສ້າງ-ບຳລຸງມາແລ້ວ ຍັງເຮັດບໍ່ທັນເປັນປົກກະຕິ ແລະຕໍ່ເນື່ອງ: ເຖິງແມ່ນວ່າມີແຜນການກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກພັກໜຸ່ມ ແລ້ວກໍຕາມ ແຕ່ການຈັດຕັ້ງປະຕິບັດຕົວຈິງ ຍັງບໍ່ທັນໄດ້ດີ ຍ້ອນການຕິດຕາມ, ກວດກາ ແລະສະຫຼຸບຖອດຖອນບົດຮຽນ

**ທິດທາງການກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກພັກໜຸ່ມ ຂອງພັກປະຊາຊົນປະຕິວັດລາວ ໃນຕໍ່ໜ້າ**

1). ທິດທາງລວມ ຂອງພັກປະຊາຊົນປະຕິວັດລາວ ໃນການກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກພັກໜຸ່ມ.

ເອກະສານກອງປະຊຸມໃຫຍ່ ຂອງພັກປະຊາຊົນປະຕິວັດລາວ ໄດ້ເນັ້ນວ່າ: ການສ້າງ ແລະຈັດຕັ້ງປະຕິບັດແຜນກຳນົດພະນັກງານຢ່າງເປັນລະບົບ ແມ່ນພາກສ່ວນໜຶ່ງ ທີ່ມີຄວາມສຳຄັນແຖວໜ້າໃນວຽກງານພະນັກງານ ເຊິ່ງເປັນຂອດທີ່ຂາດບໍ່ໄດ້ສຳລັບການບຳລຸງສ້າງ, ເລືອກເຟັ້ນ ແລະ ຈັດວາງພະນັກງານແບບວິທະຍາສາດ ແລະ ມີຄວາມເປັນເຈົ້າການ, ການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂອງພັກທຸກລະດັບຕ້ອງສ້າງ, ການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດແຜນກຳນົດພະນັກງານ-ສະມາຊິກພັກສືບທອດນຳພາ-ຄຸ້ມຄອງຢ່າງຈະແຈ້ງ ຈາກຖັນແຖວພະນັກງານໜຸ່ມ ເພື່ອສ້າງເປັນແຫຼ່ງພະນັກງານສືບທອດ ທີ່ມີເພດຍິງ, ເຜົ່າ ແລະ ຂົງເຂດການເຄື່ອນໄຫວອັນຫຼາກຫຼາຍ. ບົນພື້ນຖານຂອງແຜນກຳນົດອັນຖືກຕ້ອງ, ການຈັດຕັ້ງທີ່ກ່ຽວຂ້ອງແຕ່ລະຂັ້ນ ຕ້ອງຮັບປະກັນການດຳເນີນການບຳລຸງ, ກໍ່ສ້າງ ໃຫ້ພະນັກງານທີ່ນອນໃນເປົ້າໝາຍ ຢ່າງເປັນລະບົບ, ຜ່ານໂຮງຮຽນ ແລະ ຜ່ານຂະບວນການຕົວຈິງ; ຕ້ອງສົມທົບລະຫວ່າງການບຳລຸງສ້າງຍົກລະດັບຄວາມຮູ້-ຄວາມສາມາດກັບການຊຸກຍູ້ ແລະປຸກລະດົມການຝຶກຝົນຫຼໍ່ຫຼອມດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ແລະ ແບບແຜນໃນການປະພຶດປະຕິບັດ ຂອງສະ ມາຊິກພັກ-ພະນັກງານ ທີ່ນອນໃນແຜນກຳນົດ, ບັນລຸຕາມມາດຕະຖານ ແລະ ເງື່ອນໄຂໃຫ້ແກ່ຂະບວນການເລືອກ ເຟັ້ນ ແລະ ຈັດວາງເຂົ້າໃນຕຳແໜ່ງນຳພາ-ຄຸ້ມຄອງ ແລະ ຖ້າໄດ້ຮັບການສັບຊ້ອນຈັດວາງເຂົ້າສູ່ຕຳແໜ່ງງານນຳພາ-ຄຸ້ມຄອງແລ້ວ ກໍສາມາດເສີມຂະຫຍາຍຄວາມຮູ້ຄວາມສາມາດ ໃນການປະຕິບັດໜ້າທີ່, ທຸກຂັ້ນຕອນຂອງການຈັດຕັ້ງປະ ຕິບັດແຜນກຳນົດພະນັກງານ ຕ້ອງສອດຄ່ອງກັບຫຼັກການພື້ນຖານຂອງພັກ, ຮັບປະກັນລັກສະນະພາວະວິໄສ, ເປີດ ເຜີຍ ເພື່ອກະຕຸ້ນການແຂ່ງຂັນພັດທະນາຕົນເອງ ຂອງຖັນແຖວສະມາຊິກພັກ-ພະນັກງານ ແລະ ທັງໝົດຕ້ອງຢູ່ໃນຄວາມຮັບຜິດຊອບໂດຍກົງ ແລະ ເດັດຂາດ ຂອງຄະນະພັກແຕ່ລະຂັ້ນ.

2). ທິດທາງສະເພາະ ໃນການກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກພັກໜຸ່ມ ໃນຕໍ່ໜ້າ.

- ການກໍ່ສ້າງ, ບຳລຸງພະນັກງານ, ສະມາຊິກພັກໜຸ່ມ ຕ້ອງເລີ່ມຈາກໜ້າທີ່ການເມືອງ: ໃນເງື່ອນໄຂທີ່ທ່າອ່ຽງ ລວມແຫ່ງຍຸກສະໄໝ ຂອງສັງຄົມລາວມີການຂະຫຍາຍຕົວ, ປ່ຽນແປງໄປຕາມແຕ່ລະໄລຍະນັ້ນ ບັນດາທັດສະນະແນວທາງ ແລະ ໜ້າທີ່ການເມືອງຂອງພັກ ກໍຄືການກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກພັກໜຸ່ມ ກໍຕ້ອງມີການປ່ຽນ ແປງໄປຕາມສະພາບແວດລ້ອມ ໃນທ່າອ່ຽງຂອງຍຸກສະໄໝ ເພື່ອຮອງຮັບໜ້າທີ່ການເມືອງໃນສະເພາະ ແລະຍາວນານ ຂອງພັກ, ຮັບປະກັນຖືກຕ້ອງຕາມຫຼັກການພັກນຳພາໂດຍກົງ ແລະ ເປັນເອກະພາບທາງດ້ານການເມືອງ, ແນວຄິດ, ການຈັດຕັ້ງ ແລະ ແບບແຜນວິທີນຳພາ. ດັ່ງທ່ານ ຄຳໄຕ ສີພັນດອນ ຕໍ່ກອງປະຊຸມວຽກງານພະນັກງານທົ່ວປະເທດ ວ່າ: ຈະຢູ່ທ້ອງຖິ່ນ ຫຼື ຂະແໜງການໃດກໍຕາມ ໃນເມື່ອຕ້ອງການສ້າງພະນັກງານ ກໍຕ້ອງເລີ່ມຈາກຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ການເມືອງ ຢູ່ບ່ອນນັ້ນ, ໝາຍວ່າການສ້າງພະນັກງານ ຕ້ອງຕິດພັນກັບຈຸດໝາຍ ຂອງ

ການພັດທະ ນາເສດຖະກິດ-ສັງ ຄົມ, ຈະສ້າງຢ່າງຊະຊາຍແບບບໍ່ມີແຜນການ, ບໍ່ເລີ່ມຈາກຄວາມຮຽກຮ້ອງຕ້ອງການ ແມ່ນບໍ່ໄດ້ຢ່າງເດັດຂາດ ພວກເຮົາຕ້ອງພະຍາຍາມແກ້ໄຂ ແລະບໍ່ຊ້ຳຮອຍເກົ່າທີ່ພາໃຫ້ເກີດມີສະພາບພະນັກງານເຫຼືອ, ບໍ່ມີສະມັດຕະພາບ, ຂາດພະນັກງານ ທີ່ມີຄວາມຈຳເປັນຄືຜ່ານມາ.

- ການກໍ່ສ້າງ, ບຳລຸງພະນັກງານ, ສະມາຊິກພັກໜຸ່ມ ບົນພື້ນຖານແຜນກຳນົດ: ແຜນກຳນົດພະນັກງານ, ສະ ມາຊິກພັກໜຸ່ມ ເປັນແຜນທີ່ສຳຄັນ, ເປັນບ່ອນອີງຕົ້ນຕໍໃຫ້ແກ່ການສ້າງແຜນກຳນົດ ຫຼື ແຜນກໍ່ສ້າງ, ບຳລຸງດ້ານຕ່າງໆ ແລະ ມີແຕ່ດຳເນີນການຂຶ້ນແຜນກຳນົດພະນັກງານ-ສະມາຊິກພັກໜຸ່ມມີຄວາມຖືກຕ້ອງ, ຊັດເຈນເທົ່ານັ້ນ ພວກເຮົາຈຶ່ງສາມາດຮູ້ໄດ້ສະພາບດ້ານຄຸນນະພາບ ຂອງຖັນແຖວພະນັກງານ-ສະມາຊິກພັກໜຸ່ມ ແລະຂອງບຸກຄົນພະນັກງານ-ສະມາຊິກພັກໜຸ່ມເຊັ່ນ: ລະດັບຄວາມຮູ້ວິຊາສະເພາະ, ຄວາມຮູ້ດ້ານທິດສະດີການເມືອງ-ການປົກຄອງ, ພາສາຕ່າງ ປະເທດ, ລະດັບຄວາມສາມາດ, ປະສິດທິຜົນໃນການປະຕິບັດໜ້າທີ່ວຽກງານ ລວມທັງດ້ານຕັ້ງໜ້າທີ່ມີທ່າຂະຫຍາຍ ແລະ ດ້ານຈຳກັດຂອງພະນັກງານ-ສະມາຊິກພັກໜຸ່ມແຕ່ລະຄົນ. ບົນພື້ນຖານນັ້ນ ຈຶ່ງສາມາດກຳແໜ້ນ ແລະ ມີແຜນລະອຽດ ຕໍ່ແຕ່ລະເປົ້າໝາຍວ່າຕ້ອງໄດ້ກໍ່ສ້າງ, ບຳລຸງດ້ານໃດ, ຢູ່ໃສ, ເວລາທີ່ໃດ. ທ່ານໄກສອນ ພົມວິຫານ ໄດ້ເວົ້າວ່າ: ວຽກງານກໍ່ສ້າງພະນັກງານເປັນວຽກງານທີ່ສຳຄັນ ທັງມີຄວາມຈຳເປັນ ແລະ ຮີບດ່ວນ, ເປັນປັດໄຈຕັດ ສິນໄຊ ຊະນະ ຫຼື ປະລາໄຊ ໃນການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ.

- ການກໍ່ສ້າງ, ບຳລຸງພະນັກງານ, ສະມາຊິກພັກໜຸ່ມຮັບປະກັນລັກສະນະເປັນລະບົບ, ຕໍ່ເນື່ອງ: ການກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກພັກໜຸ່ມ ຕ້ອງກຳແໜ້ນທັດສະນະຂອງພັກ ກ່ຽວກັບທິດທາງລວມ ໃນການກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກພັກ ທີ່ຮັບປະກັນຄວາມເປັນລະບົບ: ກໍ່ສ້າງ, ບຳລຸງຢູ່ພາຍໃນປະເທດ ກໍຕ້ອງຕິດພັນກັບການກໍ່ ສ້າງ, ບຳລຸງຢູ່ຕ່າງປະເທດ; ກໍ່ສ້າງ, ບຳລຸງທາງດ້ານທິດສະດີ ກໍຕ້ອງຕິດພັນກັບພຶດຕິກຳຕົວຈິງ; ກໍ່ສ້າງ, ບຳລຸງທາງດ້ານວິຊາສະເພາະ ກໍຕ້ອງຕິດພັນກັບການກໍ່ ສ້າງ, ບຳລຸງທາງດ້ານທິດສະດີການເມືອງ-ການປົກຄອງ; ກໍສ້າງ, ບຳລຸງ ຢູ່ບັນດາສະຖາບັນການສຶກສາຕ່າງໆ ນັບທາງພາຍໃນ ແລະ ຕ່າງປະເທດ ກໍຕ້ອງຕິດພັນກັບການກໍ່ສ້າງ, ບຳລຸງຢູ່ນຳຂະບວນການຕົວຈິງ ຂອງມະຫາຊົນ... ແລະການກໍ່ສ້າງ, ບຳລຸງດັ່ງກ່າວ ກໍຕ້ອງຮັບປະກັນໃຫ້ມີພະນັກງານ-ສະມາຊິກພັກໜຸ່ມທີ່ປະ ກອບມີ 3 ຮຸ່ນ 3 ປະເພດ ໄປພ້ອມໆກັນ ແລະພະນັກງານ, ສະມາຊິກພັກ 3 ຮຸ່ນ 3 ປະເພດນັ້ນ ກໍຕ້ອງມີພະນັກງານເພດຍິງ, ພະນັກງານ-ສະມາຊິກພັກຊົນເຜົ່າ ທີ່ມີນຳນວນພົນໜ້ອຍ, ມີຄວາມໜັກແໜ້ນທາງດ້ານການເມືອງ, ເຮັດວຽກດ້ວຍຄວາມຕັ້ງໜ້າ, ເອົາການເອົາງານ, ເຮັດວຽກມີປະສິດທິຜົນ, ມີຂໍ້ລິເລີ່ມທີ່ຖືກຕ້ອງ, ປະດິດສ້າງ, ກ້າຄິດ, ກ້າເຮັດ ແລະ ກ້າຮັບຜິດຊອບ, ບໍ່ຮັກສາເດີມ, ມັກຊອກຮູ້ຮໍ່າຮຽນເອົາຄວາມຮູ້ໃໝ່ໆ, ເອົາບົດຮຽນໃໝ່ໆ ເພື່ອສ້າງຄວາມກ້າວໜ້າໃຫ້ແກ່ຕົນເອງ.

- ລົງທຶນຢ່າງເໝາະສົມເຂົ້າໃນການກໍ່ສ້າງ, ບຳລຸງພະນັກງານ, ສະມາຊິກພັກໜຸ່ມ: ພັກ-ລັດ ຄວນສະໜອງງົບ ປະມານເຂົ້າໃນການກໍ່ສ້າງ, ປັບປຸງພື້ນຖານໂຄງລ່າງໃຫ້ທັນສະໄໝເປັນຕົ້ນ ຫ້ອງການ, ຫ້ອງຮຽນ, ຫ້ອງອ່ານ, ຫໍສະໝຸດ, ຫ້ອງອາຫານ, ຫໍພັກ, ສະໜາມກິລາ ແລະ ສ້າງສະພາບແວດລ້ອມທີ່ດີ ໃຫ້ແກ່ການຮຽນ-ການສອນ. ພ້ອມນັ້ນ, ຄວນປະກອບອຸປະກອນ, ວັດຖຸເຕັກນິກທີ່ທັນສະໄໝ ເພື່ອສ້າງຄວາມສະດວກໃຫ້ແກ່ການເຄື່ອນໄຫວປະຕິບັດໜ້າທີ່ຄົ້ນຄວ້າ ສິດສອນ ຂອງຄູ-ອາຈານ ໃນແຕ່ລະສາຂາວິຊາອາຊີບທີ່ແຕກຕ່າງກັນ.

**ສະຫຼຸບ**

ສັງລວມແລ້ວ, ພະນັກງານ, ສະມາຊິກພັກໜຸ່ມ ເປັນທຶນຮອນອັນປະເສີດຂອງພັກ, ຂອງຊາດ, ເປັນຜູ້ໂຄສະນາເຜີຍແຜ່ແນວທາງ, ນະໂຍບາຍຂອງພັກ-ລັດ, ສຶກສາອົບຮົມມະຫາຊົນ ແລະນຳພາຈັດຕັ້ງປະຕິບັດຕົວຈິງ ທັງເປັນຜູ້ທີ່ເກັບກຳຂໍ້ມູນ-ຂ່າວສານມາສັງລວມ ແລະ ລາຍງານໃຫ້ຂັ້ນເທິງ ກ່ຽວກັບຄວາມມຸ້ງມາດປາດຖະໜາຂອງປະຊາ ຊົນ ແລະ ນຳເອົາຂໍ້ມູນ-ຂ່າວສານຕ່າງໆ ໄປແຈ້ງໃຫ້ປະຊາຊົນ. ສະນັ້ນ, ນັບແຕ່ມື້ກຳເນີດຈົນເຖິງປະຈຸບັນ ພັກໄດ້ໃຫ້ຄວາມສຳຄັນ ແລະ ເອົາໃຈໃສ່ໃນການກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກພັກໜຸ່ມ ໃນແຕ່ລະຂັ້ນ, ແຕ່ລະຂົງເຂດວຽກງານ, ຖືນັ້ນເປັນວຽກງານທີ່ສຳຄັນ ແລະ ຈຳເປັນອັນຮີບດ່ວນ ຂອງພັກ-ລັດ ເວົ້າລວມ, ຄະນະພັກ-ອຳນາດການປົກຄອງທຸກຂັ້ນ ເວົ້າສະເພາະ ແລະ ຜ່ານການກໍ່ສ້າງ, ບຳລຸງຕົວຈິງ ເຮັດໃຫ້ໃຫ້ພະນັກງານ-ສະມາຊິກພັກໜຸ່ມ ສ່ວນຫຼາຍມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດດີ, ມີຄວາມຮູ້-ຄວາມສາມາດທາງດ້ານວິຊາສະ ເພາະ, ທິດສະດີການເມືອງ, ມີຄວາມຮູ້ດ້ານພາສາຕ່າງປະເທດ ແລະ ມີສະພາວະຄວາມເປັນຜູ້ນຳທີ່ດີ ຕອບສະໜອງໄດ້ໜ້າທີ່ການເມືອງ ຂອງພັກ-ລັດ ໄດ້ໃນລະດັບອັນແນ່ນອນ.

**ຂໍ້ສະເໜີແນະ**

- ບົນພື້ນຖານຂອງແຜນກຳນົດອັນຖືກຕ້ອງ, ການຈັດຕັ້ງທີ່ກ່ຽວຂ້ອງແຕ່ລະຂັ້ນຕ້ອງຮັບປະກັນການດຳເນີນການບຳລຸງ, ກໍ່ສ້າງ ໃຫ້ພະນັກງານທີ່ນອນໃນເປົ້າໝາຍ ຢ່າງເປັນລະບົບ, ຜ່ານໂຮງຮຽນ ແລະ ຜ່ານຂະບວນການຕົວຈິງ; ຕ້ອງສົມທົບລະຫວ່າງການບຳລຸງສ້າງຍົກລະດັບຄວາມຮູ້-ຄວາມສາມາດ

ກັບການຊຸກຍູ້ ແລະ ປຸກລະດົມການຝຶກຝົນຫຼໍ່ຫຼອມດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ແລະ ແບບແຜນໃນການປະພຶດປະຕິບັດຂອງສະ ມາຊິກພັກ-ພະນັກງານ.

- ການກໍ່ສ້າງ, ບຳລຸງພະນັກງານ, ສະມາຊິກພັກໜຸ່ມ ຕ້ອງເລີ່ມຈາກໜ້າທີ່ການເມືອງ: ໃນເງື່ອນໄຂທີ່ທ່າອ່ຽງ ລວມແຫ່ງຍຸກສະໄໝ ຂອງສັງຄົມລາວມີການຂະຫຍາຍຕົວ, ປ່ຽນແປງໄປຕາມແຕ່ລະໄລຍະນັ້ນ ບັນດາທັດສະນະແນວທາງ ແລະ ໜ້າທີ່ການເມືອງຂອງພັກ ກໍຄືການກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກພັກໜຸ່ມ ກໍຕ້ອງມີການປ່ຽນແປງໄປຕາມສະພາບແວດລ້ອມໃນທ່າອ່ຽງຂອງຍຸກສະໄໝ ເພື່ອຮອງຮັບໜ້າທີ່ການເມືອງໃນສະເພາະແລະຍາວນານ ຂອງພັກ.

- ການກໍ່ສ້າງ, ບຳລຸງພະນັກງານ, ສະມາຊິກພັກໜຸ່ມ ບົນພື້ນຖານແຜນກຳນົດ: ແຜນກຳນົດພະນັກງານ, ສະ ມາຊິກພັກໜຸ່ມ ເປັນແຜນທີ່ສຳຄັນ, ເປັນບ່ອນອີງຕົ້ນຕໍໃຫ້ແກ່ການສ້າງແຜນກຳນົດ ຫຼື ແຜນກໍ່ສ້າງ, ບຳລຸງດ້ານຕ່າງໆ ແລະ ມີແຕ່ດຳເນີນການຂຶ້ນແຜນກຳນົດພະນັກງານ-ສະມາຊິກພັກໜຸ່ມມີຄວາມຖືກຕ້ອງ, ຊັດເຈນເທົ່ານັ້ນ ພວກເຮົາຈຶ່ງສາມາດຮູ້ໄດ້ສະພາບດ້ານຄຸນນະພາບຂອງຖັນແຖວພະນັກງານ-ສະມາຊິກພັກໜຸ່ມ.

- ການກໍ່ສ້າງ, ບຳລຸງພະນັກງານ, ສະມາຊິກພັກໜຸ່ມ ຮັບປະກັນລັກສະນະເປັນລະບົບ, ຕໍ່ເນື່ອງ: ການກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກພັກໜຸ່ມຕ້ອງກຳແໜ້ນທັດສະນະຂອງພັກກ່ຽວກັບທິດທາງລວມໃນການກໍ່ສ້າງ, ບຳລຸງພະນັກງານ-ສະມາຊິກພັກ ທີ່ຮັບປະກັນຄວາມເປັນລະບົບ.

- ລົງທຶນຢ່າງເໝາະສົມເຂົ້າໃນການກໍ່ສ້າງ, ບຳລຸງພະນັກງານ, ສະມາຊິກພັກໜຸ່ມ: ພັກ-ລັດ ຄວນສະໜອງງົບ ປະມານເຂົ້າໃນການກໍ່ສ້າງ, ປັບປຸງພື້ນຖານໂຄງລ່າງໃຫ້ທັນສະໄໝ ເປັນຕົ້ນ ຫ້ອງການ, ຫ້ອງຮຽນ, ຫ້ອງອ່ານ, ຫໍສະໝຸດ, ຫ້ອງອາຫານ, ຫໍພັກ, ສະໜາມກິລາ ແລະ ສ້າງສະພາບແວດລ້ອມທີ່ດີ ໃຫ້ແກ່ການຮຽນ-ການສອນ.

- ພັກ-ລັດ ຄວນມີນະໂຍບາຍ ຕໍ່ພະນັກງານ, ຄູ-ອາຈານ ແລະ ນັກສຶກສາ ໃຫ້ເໝາະສົມ. ເພາະນັ້ນ ແມ່ນໄມ້ງັດທີ່ເປັນທ່າແຮງຊຸກຍູ້ການສອນ ຂອງຄູ-ອາຈານ, ການຮຽນ ຂອງນັກສຶກສາ ເພື່ອວ່ານະໂຍບາຍ ມັນເປັນສິ່ງກະຕຸກຊຸກຍູ້ໃຫ້ພະນັກງານ-ສະມາຊິກພັກໜຸ່ມ ມີກຳລັງໃຈຝຶກຝົນ ແລະ ເຮັດສຳເລັດໜ້າທີ່ວຽກງານ.

**ເອກະສານອ້າງອີງ**


ກົມການເມືອງສູນກາງພັກ. (2021). *ກອງປະຊຸມໃຫຍ່ຄັ້ງທີ XI.* ນະຄອນຫຼວງວຽງຈັນ: ຄະນະໂຄສະນາອົບຮົມສູນກາງພັກ.

ກົມການເມືອງສູນກາງພັກ. (2021). *ບົດລາຍງານການເມືອງຕໍ່ກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ.* ນະຄອນຫຼວງວຽງຈັນ: ກົມການເມືອງສູນກາງພັກ.

ຄະນະບໍລິການງານສູນກາງພັກ. (2021). *ກົດລະບຽບພັກປະຊາຊົນປະຕິວັດລາວ.* ນະຄອນຫຼວງສ່ວນຕົວ: ຄະນະບໍລິຫານງານສູນກາງພັກ.

ຄະນະໂຄສະນາອົບຮົມສູນກາງພັກ. (2011). *ມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ IX.* ນະຄອນຫຼວງວຽງຈັນ: ຄະນະໂຄສະນາອົບຮົມສູນກາງພັກ.

ຄະນະໂຄສະນາອົບຮົມສູນກາງພັກ. (2016). *ການກໍ່ສ້າງ ແລະ ບຳລຸງພະນັກງານ.* ນະຄອນຫຼວງວຽງຈັນ: ຄະນະໂຄສະນາອົບຮົມສູນກາງພັກ.

ປະຊຸມ ລອດປະເສີດ. (1987). *ການພັດທະນາບຸກຄະລາກອນ.* ກຸງເທບມະຫານະຄອນ, ຣາຊະອານາຈັກໄທ: ບາງກອກການພິມ.

ປະທານ ໄກສອນ ພົມວິຫານ. (1986). *ບົດສູນທອນພົດໃນວາລະກອງປະຊຸມໃຫຍ່ຄັ້ງທີ IV ຂອງພັກປະຊາຊົນປະຕິວັດລາວ.* ນະຄອນຫຼວງວຽງຈັນ, ສປປ ລາວ: ຄະນະໂຄສະນາອົບຮົມສູນກາງພັກ.

ວິລະຍຸດ ຫຼໍ່ເລີດລັດ. (1988). *ວິລະຍຸດ ຫຼໍ່ປະເສີດ.* ກຸງເທບມະຫານະຄອນ, ຣາຊະອານາຈັກໄທ: ຈຸລາລົງກອນມະຫາວິທະຍາໄລ.

ວິວັນ ຈັນທະໂຄດ. (2012). *ຄວາມຄິດເຫັນຕໍ່ທິດສະດີພະນັກງານ.* ນະຄອນຫຼວງວຽງຈັນ.

ວົງ ສານສີຣິ. (1995). *ການພັດທະນາບຸກຄະລາກອນ.* ກຸງເທບມະຫານະຄອນ, ຣາຊະອານາຈັກໄທ: ຈຸລາລົງກອນມະຫາວິທະຍາໄລ.

ວັດຖາ ລິ່ມສະກຸນ. (1984). *ການພັດທະນາບຸກຄະລາກອນ.* ກຸງເທບມະຫານະຄອນ, ຣາຊະອານາຈັກໄທ: ໂອດຽນສະໂຕຣ.

Ho Chi Minh. (1920). *ການຈັດວາງພະນັກງານ.* ໂຮຈິ່ມິງ.

Marxist and Lenin ອ້າງໃນ ນິພົນເລືອກເຟັ້ນ2 ປະທານ ໄກສອນ ພົມວິຫານ. (1986). *ການຈັດການພະນັກງານ.* ກຳແພງນະຄອນ: ໂຮງພິມແຫ່ງຊາດ.